# <u>ຄຳນຳ</u>

ບາງຄັ້ງມີຄົນມາເປັນພະຍານເຖິງ **"ພຣະເຈົ້າ"** ເມື່ອເຮົາໄດ້ຍິນແລ້ວ ເຫັນວ່າເປັນເລື່ອງທີ່ງົມງວາຍ ເຊື່ອຖືບໍ່ໄດ້ ໄຮ້ສາລະ ແລະບໍ່ຍອມເປີດໃຈຮັບຟັງເຫດຜົນໃດໆທັງສິ້ນ. ໃນອະດີດຂ້າພະເຈົ້າເປັນຄົນເຊັ່ນນີ້ ແລະບັດນີ້ຂ້າພະເຈົ້າໄດ້ຮູ້ຈັກພຣະເຈົ້າທີ່ທ່ຽງແທ້ແລ້ວ, ຂ້າພະເຈົ້າໄດ້ພົບສິ່ງອັດສະຈັນຫຼາຍຢ່າງທີ່ພຣະເຈົ້າໄດ້ຊົງເປີດເຜີຍໄວ້ໃນພຣະຄຳພີ ເຊັ່ນ ເລື່ອງຫົນທາງສູ່ຄວາມພົ້ນອັນອັດສະຈັນ, ຄວາມສຸກແທ້ທີ່ເຮົາໃຝ່ຫາ, ການພົ້ນຈາກບ້ວງຂອງເວນກຳແລະຂ້ອຍຂ້າຂອງມານ, ການທຳນວາຍອະນາຄົດຂອງໂລກອັນໜ້າຕື່ນເຕັ້ນໃນພຣະທຳພຣະນິມິດແລະພຣະທຳດານຽນ.

ທ່ານທີ່ຮັກ ວິທະຍາສາດແທ້ກັບພຣະເຈົ້າບໍ່ໄດ້ຂັດແຍ່ງກັນ , ວິທະຍາສາດແທ້ໄດ້ພິສູດວ່າມີພຣະເຈົ້າ ແລະເລື່ອງຂອງພຣະເຈົ້າບໍ່ໄດ້ເປັນການຄາດຄະເນຫຼືເດົາເອົາເໝືອນຢ່າງທິດສະດີວິວັດທະນາການຂອງຊາຣ໌ລສ໌ ດາຣ໌ວິນ ແຕ່ປະກອບດ້ວຍເຫດຜົນທີ່ເຮົາສາມາດພິສູດໄດ້. ກ່ອນທີ່ທ່ານຈະປະຕິເສດຢ່າງເຕັມທີ່ວ່າ **"ບໍ່ມີພຣະເຈົ້າ"** ຂໍໃຫ້ທ່ານກະລຸນາອ່ານແລະພິຈາລະນາເຫດຜົນໃນໜັງສືເຫຼັ້ມນີ້ **ຈິງຫຼື! ທີ່ວິທະຍາສາດພິສູດວ່າມີພຣະເຈົ້າ.**

ຂໍຂອບໃຈ Dr. Philip D. Pope ທີ່ກະລຸນາຊ່ວຍຫາຂໍ້ມູນໃນການຂຽນໜັງສືເຫຼັ້ມນີ້ (The Lectures of Dr. Kent Hovind)

ດ້ວຍຮັກໃນພຣະຄຣິດ

ໜັງສືອ້າງອີງ


1. ວິທະຍາສາດທົ່ວໄປ ສ. ສະໝອນ ຜົນພັກງາມ ໜ້າ 1
2 The Lectures of Dr. Kent Hovind ໜ້າ 2-6
3 Funk & Wagnalls New Encyclopedia ໜ້າ 7-8
4 Encyclopedia Britanica ໜ້າ 9-10
5 John Myers, Voices from the Edge of Eternity ໜ້າ 11-12


## ຄວາມຮູ້ເພີ່ມເຕີມ

ຄຣິສຕະຈັກ (ອານາ) ແບັບຕິສ ເປັນຄຣິສຕະຈັກດັ້ງເດີມມາ ແຕ່ສະໄໝພຣະເຢຊູຄຣິດແລະອັກຄະສາວົກ ໃຊ້ພຣະຄຳພີເປັນພື້ນຖານແຫ່ງຄວາມເຊື່ອ. ແບັບຕິສ ບໍ່ໄດ້ເປັນໂປຣແຕສແຕນດ໌ທີ່ແຍກມາຈາກຄາທໍລິກ, ຄາທໍລິກເລີ່ມກໍ່ຕັ້ງຂຶ້ນໃນປີ ຄ.ສ 313 ໂດຍກະສັດຄອນສະແຕນຕິນ ສ່ວນໂປຣແຕສແຕນດ໌ເລີ່ມແຍກອອກຈາກຄາທໍລິກເປັນນິກາຍຕ່າງໆໃນປີ ຄ.ສ 1530 ເປັນຕົ້ນມາ ສະນັ້ນຈະເຫັນວ່າຄາທໍລິກແລະໂປຣແຕສແຕນດ໌ ກໍາເນີດຂຶ້ນພາຍຫຼັງແບັບຕິສ.



# ຈິງຫຼື!
# ທີ່ວິທະຍາສາດພິສູດວ່າມີພຣະເຈົ້າ

ຂະນະເມື່ອທ່ານຫຼຽວເບິ່ງໂລກ ດວງດາວ ແລະຈັກກະວານ ທ່ານຄົງມີຄຳຖາມຫຼວງຫຼາຍຢູ່ໃນໃຈແລະຕ້ອງການຄຳຕອບຢ່າງຊັດເຈນ ທ່ານເຄີຍມີຄຳຖາມເຫຼົ່ານີ້ຫຼືບໍ?

1. ໂລກ ດວງດາວ ແລະຈັກກະວານມາຈາກໃສ?
2. ເຮົາເກີດມາເຮັດຫຍັງ? ມີຊີວິດຢູ່ເພື່ອຫຍັງ? ຕາຍແລ້ວຈະໄປໃສ? ນະຮົກ-ສະຫວັນ ມີຈິງບໍ?
3. ໂລກນີ້ເກີດມາຈາກທຳມະຊາດຢ່າງບັງເອີນຫຼືເບື້ອງຫຼັງມີຜູ້ສ້າງ ຖ້າໂລກນີ້ເກີດມາຈາກທຳມະຊາດຢ່າງບັງເອີນ ເປັນຫຍັງຈຶ່ງມີໂລກຂອງວິນຍານ ໄສຍະສາດ ອຳນາດເລີກລັບ ການຊົງເຈົ້າເຂົ້າຜີ ຜີບ້ານທີ່ຄົນສ່ວນໃຫຍ່ໃຫ້ອາຫານ ພວກອິງເທບເຂົ້າສິງໃນຮ່າງມະນຸດ... ສິ່ງເຫຼົ່ານີ້ມາຈາກໃສແລະເປັນຫຍັງມະນຸດຈຶ່ງມີວິນຍານ.

ທ່ານຈະພົບຄຳຕອບໃນໜັງສືເຫຼັ້ມນີ້ ຂໍຢ່າວາງໜັງສືເຫຼັ້ມນີ້ ກະລຸນາອ່ານຈົນຈົບເພາະມັນໝາຍເຖິງຊີວິດໃນອານາຄົດຂອງທ່ານເອງແລະຂໍທ້າພິສູດດ້ວຍເຫດຜົນທາງວິທະຍາສາດວ່າ ລະຫວ່າງທຸກໆສິ່ງເກີດຂຶ້ນຈາກທຳມະຊາດຢ່າງບັງເອີນຫຼືວ່າເບື້ອງຫຼັງມີຜູ້ສ້າງ ເຫດຜົນໃຜມີນ້ຳໜັກຫຼາຍກວ່າກັນ. ຖ້າທ່ານເປັນຄົນແຂງກະດ້າງໄຮ້ເຫດຜົນ ຂໍທ່ານຢຸດຢູ່ພຽງເທົ່ານີ້ ແຕ່ຖ້າທ່ານເປັນຄົນທີ່ມັກຫາເຫດຜົນພິສູດດ້ວຍຄວາມຈິງ ກະລຸນາຕິດຕາມຕໍ່ໄປ.

ປະຈຸບັນມີຜູ້ທີ່ພະຍາຍາມອະທິບາຍວ່າໂລກດວງດາວແລະຈັກກະວານເກີດມາຈາກທຳມະຊາດຢ່າງບັງເອີນ ແຕ່ພຣະຄຳພີຂອງ

ພຣະເຈົ້າກ່າວວ່າ ໂລກ ດວງດາວ ແລະຈັກກະວານເບື້ອງຫຼັງນັ້ນມີຜູ້ສ້າງ ຊຶ່ງທິດສະດີທຳອິດ ທີ່ພະຍາຍາມອະທິບາຍເຖິງໂລກ ດວງດາວ ແລະຈັກກະວານ ເກີດຂຶ້ນມາຈາກທຳມະຊາດຢ່າງບັງເອີນ ຄືທິດສະດີແຫ່ງການດຳລົງຢູ່.

ທິດສະດີແຫ່ງການດຳລົງຢູ່ (The Steady-State Theory) ເປັນທິດສະດີທີ່ ຮອລ໌ຍ ບອນດິແລະໂກລດ໌ ປະກາດໃຊ້ອະທິບາຍທຳມະຊາດຂອງເອກະພົບ ໃນປີ ຄ.ສ 1951 ໂດຍກ່າວວ່າ “ເອກະພົບໃນອະດີດ ປະຈຸບັນ ຫຼື ອະນາຄົດ ກໍເໝືອນກັນຢ່າງທຸກວັນນີ້ບໍ່ປ່ຽນແປງ ເອກະພົບບໍ່ມີຈຸດເລີ່ມຕົ້ນ ບໍ່ມີອາວະສານ ໂດຍຈະມີວັດຖຸທີ່ສ້າງຂຶ້ນມາໃໝ່ຕະຫຼອດເວລາໃນອັດຕາທີ່ຫຼາຍພຽງພໍທົດແທນວັດຖຸທີ່ເຄື່ອນທີ່ໜີໄປ”. ແຕ່ໃນປີ ຄ.ສ. 1965 ຮອລ໌ຍ ໄດ້ປະກາດເລີກລົ້ມທິດສະດີຂອງເຂົາເອງ ແຕ່ມີຄົນຈຳນວນຫຼາຍຍັງເຊື່ອຢູ່.

ທິດສະດີພະຍາຍາມອະທິບາຍວ່າ ໂລກນີ້ເກີດມາຈາກທຳມະຊາດ. ອີກທິດສະດີໜຶ່ງຄືທິດສະດີເອກະພົບທີ່ລະເບີດຫຼືທິດສະດີບິກແບງ (The Big Bang Theory) ໃນປີ ຄ.ສ 1948 ກາໂມວ໌ ນັກຟີສິກ ຊາວລັດເຊຍ-ອາເມລິກາ ໄດ້ລິເລີ່ມແນວຄວາມຄິດຕາມທິດສະດີຂອງເລີແມທຣ໌ ຊຶ່ງເລີແມທຣ໌ ເອີ້ນທິດສະດີຂອງເພິ່ນວ່າທິດສະດີອະຕອມເລີ່ມຕົ້ນ ໂດຍຄິດວ່າ ເອກະພົບເລີ່ມຕົ້ນຈາກຊີ້ກົມອັນໜຶ່ງທີ່ມີຂະໜາດປະມານດາວອັງຄານ ຊຶ່ງມີເສັ້ນຜ່າສູນກາງປະມານ 4 ພັນໄມລ໌ ທີ່ປະກອບຂຶ້ນຈາກອະຕອມແລ້ວເລີ່ມລວມກັນເປັນອະຕອມຂະໜາດຍັກໂດຍແຕ່ລະອະຕອມມີຂະໜາດ 1 ລູກບາດກ໌ນິ້ວ. ແລ້ວວັນໜຶ່ງ ອະຕອມເລີ່ມຕົ້ນຂະໜາດຍັກລະເບີດອອກເຮັດໃຫ້ອະຕອມຍ່ອຍເຄື່ອນທີ່ໄປທຸກທິດທຸກທາງ ແລ້ວ ກາໂມວ໌ອະທິບາຍຕໍ່ໄປວ່າ ຈາກການລະເບີດນັ້ນເອງເຮັດໃຫ້ແຮ່ທາດຕ່າງໆ



1. ໄດ້ຮັບຄວາມພົ້ນ
2. ໄດ້ຮັບສັນຕິສຸກ
3. ໄດ້ພົ້ນອຳນາດຂອງຜີມານຊາຕານ
4. ໄດ້ຮັບການຊົງນຳຈາກພຣະເຈົ້າແລະອື່ນໆ

**ຂໍພຣະເຈົ້າອວຍພອນ**

ຖ້າທ່ານຮັບເຊື່ອຫຼືສົນໃຈໂປດເຮັດເຄື່ອງໝາຍ [X] ລົງໃນຊ່ອງ [ ] ຕາມຄວາມຕ້ອງການ.

[ ] ຂ້າພະເຈົ້າໄດ້ຕ້ອນຮັບພຣະເຢຊູຄຣິດເປັນພຣະຜູ້ຊ່ອຍໃຫ້ພົ້ນແລະເປັນພຣະເຈົ້າໃນຊີວິດຂ້າພະເຈົ້າແລ້ວ.

[ ] ຂ້າພະເຈົ້າຢາກຕ້ອນຮັບພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ພົ້ນ.

[ ] ຂ້າພະເຈົ້າຢາກຮຽນບົດຮຽນໄປສະນີ (ຟຣີ)

[ ] ຂ້າພະເຈົ້າຕ້ອງການໜັງສືເພີ່ມເຕີມ (ຟຣີ)

[ ] ຂ້າພະເຈົ້າຕ້ອງການໃຫ້ທ່ານໄປຢ້ຽມຢາມທີ່ບ້ານ

ຊື່_______________________________________________

ທີ່ຢູ່_____________________________________________

__________________________________________________

ກະລຸນາສົ່ງ :

**ແລະພຣະອົງໄດ້ຊົງສິ້ນພຣະຊົນເທິງໄມ້ກາງແຂນແລະພຣະໂລຫິດຂອງພຣະອົງໄດ້ໄຫຼອອກຊຳລະຄວາມຜິດບາບຂອງຂ້ານ້ອຍຄົນບາບທັງຫຼາຍ.**

**ຂ້ານ້ອຍເຊື່ອວ່າພຣະເຢຊູຄຣິດໄດ້ຟື້ນຂຶ້ນມາຈາກຕາຍໃນວັນທີ່ສາມແລະພຣະອົງຊົງພຣະຊົນຢູ່ເປັນນິດ ຂໍພຣະເຢຊູຄຣິດໂປດຊຳລະຄວາມບາບໃຫ້ຂ້ານ້ອຍ ຂອບພຣະຄຸນພຣະເຈົ້າສຳລັບຄວາມພົ້ນທີ່ພຣະອົງຊົງປະທານໃຫ້ ໃນພຣະນາມຂອງພຣະເຢຊູຄຣິດ ອາແມນ".**

## ຮຽນທ່ານທີ່ຍັງລັງເລບໍ່ຕັດສິນໃຈຮັບເຊື່ອ

ເຮົາຂໍວິງວອນທ່ານໄດ້ໃຊ້ເວລາຕຶກຕອງຄວາມຈິງຂອງຊີວິດນີ້ ກະລຸນາພິຈາລະນາດ້ວຍເຫດແລະຜົນໂດຍເຮັດໃຈເປັນກາງບໍ່ໂອນອຽງໄປທາງຝ່າຍໃດ ຂໍກະລຸນາຢ່າປິດປະຕູໃຈຂອງທ່ານຈົນສະໜິດ.

ພຣະເຢຊູຄຣິດພຣະອົງຊົງຮັກທ່ານພຣະອົງຊົງເຄາະທີ່ປະຕູໃຈຂອງທ່ານ ພຣະອົງພ້ອມທຸກເວລາທີ່ຈະເຂົ້າໄປຫາທ່ານ ພຽງແຕ່ທ່ານເປີດໃຈອອກຕ້ອນຮັບພຣະອົງ.

ອັນໜຶ່ງ ຄວາມພົ້ນມີໄວ້ສຳລັບຄົນເປັນເທົ່ານັ້ນ ຄົນທີ່ຕາຍແລ້ວບໍ່ມີສິດກັບໃຈໃນນະຮົກ ຖ້າໝົດລົມຫາຍໃຈເມື່ອໃດກໍໝົດໂອກາດເມື່ອນັ້ນ ແຕ່ດຽວນີ້ໂອກາດເປັນຂອງທ່ານແລ້ວ ເຮົາຫວັງວ່າທ່ານຈະເປັນເພື່ອນຂອງເຮົາໃນສະຫວັນ ການມາຫາພຣະເຢຊູຄຣິດມີແຕ່ໄດ້ບໍ່ມີເສຍ.



ຖືກສ້າງຂຶ້ນພາຍໃນບໍ່ເທົ່າໃດນາທີຊຶ່ງຫຼັງຈາກການລະເບີດຄັ້ງໃຫຍ່ນັ້ນມີອຸນຫະພູມສູງຫຼາຍແລະຄວາມໜາແໜ້ນຂອງຈັກກະວານຈະຫຼອມອະນຸພາກທີ່ນ້ອຍກວ່າອະຕອມມາເປັນສານເຄມີຕ່າງໆ ໂດຍແກ໊ສ ໄຮໂດຣເຈນ ກັບແກ໊ສ ຮີລຽມ ເກີດຂຶ້ນເປັນອັນດັບທຳອິດໃນການລະເບີດ ແລະພາຍຫຼັງທາດຕ່າງໆທີ່ໜັກກວ່າຈະຖືກສ້າງຂຶ້ນພາຍໃນດວງດາວຕ່າງໆ ແລະໂດຍຄວາມໜາແໜ້ນສູງຫຼາຍນັ້ນເອງພາຍໃນອະຕອມເລີ່ມຕົ້ນເຮັດໃຫ້ຈັກກະວານຂະຫຍາຍຕົວຢ່າງໄວວາ ຂະນະທີ່ຈັກກະວານຂະຫຍາຍຕົວນັ້ນ ແກ໊ສໄຮໂດຣເຈນກັບແກ໊ສຮີລຽມ ຈະເຢັນລົງແລະອັດເຂົ້າມາເປັນດວງດາວຕ່າງໆ ຕໍ່ມາພາຍຫຼັງນັກວິທະຍາສາດໄດ້ພິສູດເຖິງແຮ່ທາດທີ່ຢູ່ພາຍໃນໂລກຂອງເຮົາ ພົບວ່າມີແກ໊ສໄຮໂດຣເຈນກັບແກ໊ສຮີລຽມໜ້ອຍເຫຼືອເກີນຊຶ່ງຂັດແຍ່ງກັບທິດສະດີບິກແບງ.

ແລະກຸ່ມທີ່ເຊື່ອວ່າໂລກນີ້ເກີດຂຶ້ນມາຈາກທຳມະຊາດແລະການບັງເອີນ ຄິດວ່າຈັກກະວານມີອາຍຸປະມານ 18-20 ພັນລ້ານປີ (billion) ດຣ. ເຄັນທ໌ ໂຮວິນດ໌ ນັກວິທະຍາສາດຄຣິສຕຽນ ໄດ້ອະທິບາຍເຖິງຄວາມຈິງໃຫ້ຟັງວ່າ ຄົນທີ່ຄິດວ່າຈັກກະວານແລະໂລກເກີດຂຶ້ນມາ 18-20 ພັນລ້ານປີ ເປັນຄວາມຈິງຫຼື? ຈາກຂໍ້ພິສູດຕ່າງໆນັກວິທະຍາສາດພິສູດແລ້ວວ່າພື້ນທີ່ຜິວຂອງດວງອາທິດຈະຍຸບຕົວລົງ 16 ແມັດຕໍ່ທຸກໆຊົ່ວໂມງ ເຮັດໃຫ້ຂະໜາດຂອງດວງອາທິດລຸດລົງເລື້ອຍໆໂດຍທີ່ເຮົາໄດ້ຮັບຄວາມສະຫວ່າງແລະຄວາມຮ້ອນນັ້ນເພາະເກີດຈາກການລະເບີດຂອງແກ໊ສທີ່ຜິວຂອງດວງອາທິດເປັນເຫດໃຫ້ຜິວຂອງດວງອາທິດຍຸບຕົວລົງ. ປະຈຸບັນດວງອາທິດຫ່າງຈາກໂລກປະມານ 93 ລ້ານໄມລ໌ ຖ້າຍ້ອນກັບໄປພຽງແຕ່ 20 ພັນລ້ານປີເທົ່ານັ້ນ ດວງອາທິດຈະມີຂະໜາດໃຫຍ່ເຖິງຂະໜາດທີ່ຜິວ

ຂອງດວງອາທິດໃກ້ຈົນສຳຜັດກັບຜິວໂລກຂອງເຮົາ ນັກວິທະຍາສາດສະຫລຸບເອງວ່າເປັນໄປບໍ່ໄດ້ທີ່ໂລກກັບດວງອາທິດຈະໃກ້ກັນຂະໜາດນີ້.

ວົງແຫວນຂອງດາວເສົານັ້ນປະຈຸບັນນັກວິທະຍາສາດພິສູດແລ້ວວ່າ ວົງແຫວນຂອງດາວເສົາຈະຂະຫຍາຍຕົວອອກຕະຫຼອດເວລາ ເມື່ອຄິດໄລ່ອັດຕາການຂະຫຍາຍຕົວຂອງວົງແຫວນດາວເສົາ ແລະໄດ້ພິສູດແລ້ວວ່າວົງແຫວນນັ້ນມີອາຍຸໜ້ອຍກວ່າ 10,000 ປີ.

ດາວຫາງ (Comets) ນັກວິທະຍາສາດພິສູດແລ້ວວ່າ ອາຍຸຂອງດາວຫາງແຕ່ລະດວງນັ້ນຈະມີອາຍຸບໍ່ເກີນ 15,000 ປີ ຖ້າເປັນຢ່າງນັ້ນແລ້ວ ດາວຫາງຕ່າງໆທີ່ເກີດຂຶ້ນເມື່ອຄັ້ງກ່ອນທີ່ເກີດຈາກການລະເບີດຕາມທິດສະດີບິກແບງເມື່ອ 18-20 ພັນລ້ານປີທີ່ຜ່ານມານັ້ນ ເປັນຫຍັງປະຈຸບັນຍັງມີດາວຫາງ? ຖ້າທິດສະດີບິກແບງເປັນຄວາມຈິງ ປະຈຸບັນຄົງບໍ່ມີດາວຫາງໃຫ້ເຫັນອີກແລ້ວ.

ສະໜາມແມ່ເຫຼັກຂອງໂລກ ນັກວິທະຍາສາດພົບວ່າ ຄວາມແຮງຂອງສະໜາມແມ່ເຫຼັກໄດ້ລຸດນ້ອຍລົງເລື້ອຍໆ ຊຶ່ງຖ້າວັດແທກອັດຕາການລຸດລົງຂອງສະໜາມແມ່ເຫຼັກໂລກ ໃຫ້ເຮົາຍ້ອນຫຼັງໄປພຽງ 15,000 ປີເທົ່ານັ້ນ ສະໜາມແມ່ເຫຼັກໂລກຈະມີຄວາມແຮງຫຼາຍຈົນສິ່ງມີຊີວິດບໍ່ສາມາດທີ່ຈະອາໄສຢູ່ໄດ້.

ການໂຄຈອນຮອບໂລກຂອງດວງຈັນ ນັກວິທະຍາສາດໄດ້ພິສູດແລ້ວວ່າ ໄລຍະຫ່າງຂອງວົງໂຄຈອນທີ່ດວງຈັນເຄື່ອນທີ່ຮອບໂລກນັ້ນ ໄລຍະຫ່າງຈະຫຼາຍຂຶ້ນເລື້ອຍໆ ຊຶ່ງຖ້າຍ້ອນກັບໄປເປັນເວລາພັນລ້ານປີເທົ່ານັ້ນ ໄລຍະຫ່າງຂອງວົງໂຄຈອນກັບໂລກຂອງເຮົາຈະໃກ້ກັນເຖິງຂະໜາດທີ່ຜິວຂອງໂລກກັບດວງຈັນສຳຜັດກັນ, ຖ້າດວງຈັນຢູ່ໃກ້ກັບໂລກເຖິງຂະໜາດນັ້ນ ຈະເຮັດໃຫ້ນ້ຳຖ້ວມໂລກເຖິງວັນລະ 2 ຄັ້ງ.



*ເຈົ້າແລ້ວ" ແຕ່ໂທມາຕອບເຂົາເຫຼົ່ານັ້ນວ່າ "ຖ້າຂ້ອຍບໍ່ເຫັນຮອຍຕະປູທີ່ພຣະຫັດຂອງພຣະອົງ ແລະບໍ່ໄດ້ເອົານິ້ວມືຂອງຂ້ອຍຈັບບາຍທີ່ຮອຍຕະປູນັ້ນ ແລະບໍ່ໄດ້ເອົາມືຂອງຂ້ອຍຈັບບາຍເຂົ້າໄປທີ່ສີຂ້າງຂອງພຣະອົງແລ້ວ ຂ້ອຍຈະບໍ່ເຊື່ອເລີຍ" ເມື່ອລ່ວງໄປແປດວັນແລ້ວເຫຼົ່າສາວົກຂອງພຣະອົງຢູ່ນຳກັນຂ້າງໃນອີກ ແລະໂທມາກໍຢູ່ກັບພວກເຂົາດ້ວຍ. ປະຕູປິດຢູ່ ພຣະເຢຊູສະເດັດເຂົ້າມາແລະປະທັບຢືນຢູ່ທ່າມກາງພວກເຂົາແລະກ່າວວ່າ "ສັນຕິສຸກຈົ່ງດຳລົງຢູ່ກັບທ່ານທັງຫຼາຍເກີດ" ແລ້ວພຣະອົງກ່າວກັບໂທມາວ່າ "ຈົ່ງຍື່ນນິ້ວມືມາບ່ອນນີ້ແລະເບິ່ງມືຂອງເຮົາ ຈົ່ງຍື່ນມືອອກຈັບທີ່ສີຂ້າງຂອງເຮົາ ຢ່າຂາດຄວາມເຊື່ອເລີຍແຕ່ຈົ່ງເຊື່ອເກີດ" ໂທມາທູນຕອບພຣະອົງວ່າ "ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ແລະພຣະເຈົ້າຂອງຂ້າພະອົງ" ພຣະເຢຊູກ່າວກັບລາວວ່າ "ໂທມາເອີ໋ຍ ເພາະທ່ານໄດ້ເຫັນເຮົາທ່ານຈຶ່ງເຊື່ອ ຜູ້ທີ່ບໍ່ເຫັນເຮົາແຕ່ເຊື່ອກໍເປັນສຸກ"* (ໂຢຮັນ 20:24-29) ແລ້ວຂ້າພະເຈົ້າຈະລອດພົ້ນໄດ້ຢ່າງໃດ?

ຄຳຕອບສຳລັບຄຳຖາມນີ້ຄື ຈົ່ງເຊື່ອໃນພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າ. ແລ້ວເມື່ອໃດທີ່ຂ້າພະເຈົ້າຄວນຈະຮັບເຊື່ອ?

ດຽວນີ້ "ພຣະອົງກ່າວວ່າ ໃນເວລາອັນຊອບເຮົາໄດ້ຟັງເຈົ້າໃນວັນແຫ່ງຄວາມລອດພົ້ນເຮົາໄດ້ຊ່ວຍເຈົ້າ ເບິ່ງແມ ບັດນີ້ ເປັນເວລາອັນຊອບ ເບິ່ງແມ ບັດນີ້ ເປັນວັນແຫ່ງຄວາມພົ້ນ.

ຖ້າທ່ານຕ້ອງການກັບໃຈເສຍໃໝ່ມາຫາພຣະເຈົ້າ ຂໍໃຫ້ທ່ານອະທິຖານດັ່ງນີ້ **"ຂ້າແດ່ພຣະບິດາເຈົ້າຜູ້ຊົງສະຖິດໃນສະຫວັນ ຂ້ານ້ອຍເປັນຄົນບາບທີ່ຢູ່ຫ່າງໄກຈາກພຣະເຈົ້າ ແຕ່ດຽວນີ້ຂ້ານ້ອຍໄດ້ຮູ້ຈັກພຣະເຈົ້າສ້າງໂລກທີ່ທ່ຽງແທ້ແລ້ວ ຂ້ານ້ອຍເຊື່ອວ່າພຣະເຢຊູຄຣິດຊົງເປັນພຣະເຈົ້າທີ່ສະເດັດມາຮັບສະພາບເປັນມະນຸດ**

*ສຽງກ່າວວ່າ 'ລາຊາໂລເອີຍ ຈົ່ງອອກມາເກີດ' ຜູ້ຕາຍນັ້ນກໍອອກມາມີຜ້າພັນສົບພັນມືແລະຕີນ ແລະທີ່ໜ້າກໍມີຜ້າພັນຢູ່ດ້ວຍ ພຣະເຢຊູກ່າວກັບເຂົາທັງຫຼາຍວ່າ 'ຈົ່ງແກ້ແລ້ວປ່ອຍລາວໄປເກີດ".*

ລູກຊາຍແມ່ໝ້າຍທີ່ເມືອງນາອີນ ໃນລູກາ 7:12-15 ກ່າວວ່າ *"ເມື່ອພຣະອົງສະເດັດມາໃກ້ປະຕູເມືອງນັ້ນ ເບິ່ງແມ ມີຄົນຫາມສົບຊາຍໜຸ່ມຄົນໜຶ່ງມາ ເປັນລູກຊາຍຄົນດຽວຂອງແມ່ ແລະນາງກໍເປັນແມ່ໝ້າຍ ຊາວເມືອງຈຳນວນຫຼວງຫຼາຍມາກັບຍິງນັ້ນ ເມື່ອອົງພຣະຜູ້ເປັນເຈົ້າໄດ້ຊົງທອດພຣະເນດເຫັນແມ່ຍິງນັ້ນ ພຣະອົງຊົງເມດຕາກະລຸນາລາວແລະກ່າວແກ່ລາວວ່າ 'ຢ່າຮ້ອງໄຫ້' ແລ້ວພຣະອົງສະເດັດເຂົ້າໄປແຕະຕ້ອງໂລງ ຄົນຫາມສົບນັ້ນກໍຢຸດຢືນຢູ່ ພຣະອົງຈຶ່ງກ່າວວ່າ 'ຊາຍໜຸ່ມເອີຍ ເຮົາສັ່ງເຈົ້າວ່າຈົ່ງລຸກຂຶ້ນເກີດ' ຄົນທີ່ຕາຍນັ້ນກໍລຸກຂຶ້ນນັ່ງເລີ່ມເວົ້າ ພຣະອົງຈຶ່ງຊົງມອບຊາຍໜຸ່ມໃຫ້ແກ່ແມ່ຂອງລາວ*

ກ່ອນທີ່ພຣະເຢຊູຄຣິດຈະຖືກຄຶງເທິງໄມ້ກາງແຂນ ພຣະອົງໄດ້ຖືກທຸບຕີແລະພວກທະຫານກໍເອົາໜາມສານເປັນມົງກຸດສວມພຣະສຽນຂອງພຣະອົງ ບາງຄົນເຍາະເຍີ້ຍແລະຕົບພຣະພັກຂອງພຣະເຢຊູຄຣິດ ຫຼັງຈາກທີ່ພຣະເຢຊູຄຣິດໄດ້ສິ້ນພຣະຊົນເທິງໄມ້ກາງແຂນແລ້ວ ເຂົາເອົາພຣະສົບຂອງພຣະເຢຊູຄຣິດໄປຝັງໄວ້ໃນອຸບໂມງ ແລະຕໍ່ມາເປັນເວລາອີກສາມວັນ ພຣະອົງໄດ້ຊົງຟື້ນມາຈາກຄວາມຕາຍປາກົດແກ່ເຫຼົ່າສາວົກລະຢູ່ກັບພວກເຂົາເປັນເວລາ 40 ວັນ ກ່ອນທີ່ພຣະອົງສະເດັດຂຶ້ນສູ່ສະຫວັນ ພຣະເຢຊູຄຣິດ ໄດ້ຊົງໃຫ້ໂທມາສາວົກຄົນໜຶ່ງທີ່ມັກສົງໄສພິສູດວ່າ ພຣະອົງໄດ້ຟື້ນຄືນພຣະຊົນແລ້ວ *"ແຕ່ຝ່າຍໂທມາທີ່ເຂົາເອີ້ນກັນວ່າ ດີດູໂມ ຊຶ່ງເປັນສາວົກຄົນໜຶ່ງໃນສິບສອງຄົນນັ້ນບໍ່ໄດ້ຢູ່ກັບພວກເຂົາເມື່ອພຣະເຢຊູສະເດັດມາ ສາວົກອື່ນໆຈຶ່ງບອກໂທມາວ່າ "ເຮົາໄດ້ເຫັນອົງພຣະຜູ້ເປັນ*



ຝຸ່ນທີ່ຜິວດວງຈັນ ນັກວິທະຍາສາດພິສູດແລ້ວວ່າ ມັນຈະສູງເພີ່ມຂຶ້ນ 2.5 ຊັງຕີແມັດຕໍ່ 10,000 ປີ ຊຶ່ງຖ້າດວງຈັນມີອາຍຸ 20,000 ພັນລ້ານປີຜ່ານມາແລ້ວ ຝຸ່ນທີ່ດວງຈັນຈະສູງເຖິງ 1,600 ແມັດ ແຕ່ຄວາມຈິງແລ້ວເວລາທີ່ຍານອາວະກາດຈອດເທິງພື້ນຜິວດວງຈັນວັດແທກຄວາມສູງຂອງຝຸ່ນໄດ້ 1,8 ຊັງຕີແມັດເທົ່ານັ້ນ. ແລ້ວທ່ານຄິດວ່າດວງຈັນຈະມີອາຍຸເທົ່າໃດ? ຈະມີອາຍຸເຖິງ10,000 ບໍ?

ອັດຕາຄວາມເຂັ້ມຂຸ້ນຂອງເກືອໃນມະຫາສະໝຸດ ນັກວິທະຍາສາດໄດ້ຄົ້ນພົບວ່າ ມະຫາສະໝຸດມີອັດຕາຄວາມເຂັ້ມຂຸ້ນຂອງເກືອເພີ່ມຫຼາຍຂຶ້ນເລື້ອຍໆ ປະຈຸບັນອັດຕາຄວາມເຂັ້ມຂຸ້ນຂອງເກືອໃນມະຫາສະໝຸດເປັນ 3.6% ຖ້າປຽບທຽບອັດຕາຄວາມເຂັ້ມຂຸ້ນຂອງເກືອໃນມະຫາສະໝຸດທີ່ເພີ່ມຂຶ້ນເລື້ອຍໆ ໃຫ້ເຮົາຍ້ອນກັບໄປພຽງ 5.000 ປີຈົນເຖິງປະຈຸບັນ ກໍຈະໄດ້ອັດຕາຄວາມເຂັ້ມຂຸ້ນຂອງເກືອ 3.6 %.

**ອັດຕາການຈະເລີນເຕີບໂຕປະຊາກອນຂອງໂລກ**

| | |
|---|---|
| ຄ.ສ 1985 | 5 ພັນລ້ານຄົນ |
| ຄ.ສ 1977 | 4 ພັນລ້ານຄົນ |
| ຄ.ສ 1962 | 3 ພັນລ້ານຄົນ |
| ຄ.ສ 1930 | 2 ພັນລ້ານຄົນ |
| ຄ.ສ 1800 | 1 ພັນລ້ານຄົນ |
| ຄ.ສ 1 | 200 ລ້ານຄົນ |

ກ່ອນ ຄ.ສ 2.400 ປີ ມີນ້ຳຖ້ວມໂລກຄັ້ງໃຫຍ່ ຊຶ່ງໃນປີກ່ອນ ຄ.ສ 2.400 ມີຄົນ 8 ຄົນທີ່ລອດຊີວິດຈາກຖືກນ້ຳຖ້ວມ ຈາກອັດຕາການຈະເລີນເຕີບໂຕຂອງປະຊາກອນໂລກປະມານ 2% ຕໍ່ປີ ຖ້າໃຊ້

ເວລາພຽງ 4.000 ປີເທົ່ານັ້ນກໍຈະສາມາດມີປະຊາກອນໃນໂລກ 6 ພັນລ້ານຄົນແບບສະບາຍໆ ສະນັ້ນຖ້າປະຊາກອນໂລກມີຈຳນວນຫຼາຍແລະບໍ່ເຄີຍມີນ້ຳຖ້ວມທຳລາຍສິ່ງມີຊີວິດເທິງໂລກໃນປີກ່ອນ ຄ.ສ 2.400 ໂດຍເຫຼືອປະຊາກອນໂລກພຽງ 8 ຄົນນັ້ນ ປະຊາກອນຂອງໂລກຈະມີຫຼາຍກວ່າທຸກວັນນີ້.

**ລູກສອນສະແດງທິດທາງການໝຸນ**




ຕາມຫຼັກຂອງ Angular Momentum ທີ່ກ່າວເຖິງການໂຄຈອນຂອງດວງດາວຕ່າງໆ ດຣ ເຄັນທ໌ ໂຮວິນດ໌ ອະທິບາຍຍົກຕົວຢ່າງງ່າຍໆໂດຍການໃຊ້ເຄື່ອງຫຼິ້ນເດັກນ້ອຍ ພວກມ້າໝຸນຕາມສະໜາມເດັກຫຼິ້ນຫຼືຕາມສວນສະໜຸກຕ່າງໆ ມີແກນຢູ່ກາງແລະເຮັດເປັນແຂນເຫຼັກຍື່ນອອກມາແລ້ວມີທີ່ຢືນຫຼືນັ່ງສຳລັບເດັກໆ ລັກສະນະການຫຼິ້ນກໍຈະມີຄົນຫຼືມໍເຕີຣ໌ຊ່ວຍໝຸນໃຫ້ເຄື່ອນທີ່ໄປໂດຍແບ່ງອັດຕາຄວາມໄວແຕກຕ່າງກັນ 4 ຄັ້ງ :

1. ຄັ້ງທຳອິດ ຖ້າມ້າໝຸນດ້ວຍອັດຕາຄວາມໄວປະມານ 10 ກິໂລແມັດຕໍ່ຊົ່ວໂມງ ເດັກໆມີຄວາມຮູ້ສຶກສະໜຸກສະໜານຫຼາຍ.



*ພຣະອົງ* (ເອເຟໂຊ1:7) *"ພຣະອົງຊົງເປັນຜູ້ລົບລ້າງການລົງໂທດທີ່ຕົກກັບເຮົາທັງຫຼາຍເພາະບາບຂອງເຮົາ ແລະບໍ່ແມ່ນແຕ່ບາບຂອງເຮົາພວກດຽວ ແຕ່ບາບຂອງມະນຸດທັງປວງໃນໂລກດ້ວຍ* (1 ໂຢຮັນ 2:2).

ເຊັ່ນດຽວກັນນັກໂທດທີ່ຕ້ອງໂທດປະຫານຊີວິດນັ້ນ ທາງດຽວທີ່ເຂົາຈະລອດຊີວິດໄດ້ ຕ້ອງໄດ້ຮັບພຣະມະຫາກະລຸນາທິຄຸນທີ່ຊົງໂປດພຣະລາຊະທານອະໄພໂທດແກ່ລາວເທົ່ານັ້ນ.

ພຣະເຢຊູຄຣິດ ພຣະອົງເປັນເຈົ້າຂອງໂລກແລະຈັກກະວານ ພຣະອົງມີສິດທິອຳນາດທີ່ຈະອະໄພໂທດແກ່ຄົນບາບທັງປວງທີ່ກັບມາຫາພຣະອົງ *"ຖ້າເຮົາທັງຫຼາຍຈະວ່າເຮົາບໍ່ມີບາບ ເຮົາກໍຫຼອກຕົນເອງແລະຄວາມຈິງບໍ່ໄດ້ຢູ່ໃນເຮົາເລີຍ ຖ້າເຮົາສາລະພາບບາບຂອງເຮົາພຣະອົງຊົງສັດຊື່ແລະທ່ຽງທຳກໍຈະຊົງໂປດຍົກບາບຂອງເຮົາ ແລະຈະຊົງຊຳລະເຮົາໃຫ້ພົ້ນຈາກການອະທຳທັງສິ້ນ* (1 ໂຢຮັນ 1:8-9) *"ຄືວ່າຖ້າທ່ານຈະຮັບດ້ວຍປາກຂອງທ່ານວ່າ ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າແລະເຊື່ອໃນຈິດໃຈຂອງທ່ານວ່າ ພຣະເຈົ້າໄດ້ຊົງເຮັດໃຫ້ພຣະອົງເປັນຂຶ້ນມາຈາກຄວາມຕາຍທ່ານຈະລອດພົ້ນ* (ໂຣມ 10:9).

ຖ້າຈະເວົ້າເຖິງການຟື້ນຄືນພຣະຊົນຂອງພຣະຄຣິດ ບາງຄົນອາດຈະຄິດວ່າ ນີ້ເປັນສິ່ງທີ່ໜ້າຫົວເລາະແລະເປັນໄປບໍ່ໄດ້ເລີຍ ເພາະຜິດປົກກະຕິຈາກທຳມະຊາດຂອງມະນຸດ.

ເມື່ອຄັ້ງທີ່ພຣະເຢຊູຄຣິດທີ່ພຣະອົງຊົງຢູ່ໃນໂລກນີ້ ພຣະອົງໄດ້ຊົງເຮັດການອັດສະຈັນຫຼາຍໆຄັ້ງທີ່ຊ່ວຍຄົນທີ່ຕາຍແລ້ວໃຫ້ຟື້ນມາຈາກຄວາມຕາຍ ເຊັ່ນຕົວຢ່າງຂອງລາຊາໂລ ໃນໂຢຮັນ 11:43-44 ກ່າວວ່າ *"ເມື່ອພຣະອົງກ່າວດັ່ງນັ້ນແລ້ວຈຶ່ງເປັ່ງພຣະສຸລະ*

ສະນັ້ນ ພຣະເຢຊູຄຣິດຊົງອ້ອນວອນທ່ານຜ່ານທາງຄຣິສຕຽນໃຫ້ທ່ານກັບມາຄືນດີກັນກັບພຣະອົງ ພຣະຄຳພີ 2 ໂກຣິນໂທ 5:18-21 ກ່າວວ່າ *"ທັງສິ້ນນີ້ເກີດມາຈາກພຣະເຈົ້າຜູ້ຊົງໃຫ້ເຮົາຄືນດີກັນກັບພຣະອົງທາງພຣະເຢຊູຄຣິດ ແລະຊົງໂປດປະທານໃຫ້ເຮົາຮັບໃຊ້ໃນເລື່ອງການຄືນດີກັນຄືພຣະເຈົ້າຜູ້ສະຖິດໃນອົງພຣະຄຣິດຊົງໃຫ້ໂລກນີ້ຄືນດີກັນກັບພຣະອົງເອງ ບໍ່ໄດ້ຊົງຖືໂທດໃນການລະເມີດຂອງເຂົາແລະຊົງມອບພຣະວັດຈະນະແຫ່ງການຄືນດີກັນນັ້ນໄວ້ກັບເຮົາ ສະນັ້ນເຮົາຈຶ່ງເປັນລາຊະທູດຂອງພຣະຄຣິດ ໂດຍທີ່ພຣະເຈົ້າຊົງຂໍຮ້ອງທ່ານທັງຫຼາຍທາງເຮົາ, ເຮົາຜູ້ແທນຂອງພຣະຄຣິດຈຶ່ງຂໍຮ້ອງທ່ານໃຫ້ຄືນດີກັນກັບພຣະເຈົ້າ ເພາະວ່າພຣະເຈົ້າໄດ້ຊົງກະທຳພຣະອົງຜູ້ຊົງບໍ່ມີບາບໃຫ້ເປັນຄວາມບາບເພາະເຫັນແກ່ເຮົາເພື່ອເຮົາຈະໄດ້ເປັນຄົນຊອບທຳຂອງພຣະເຈົ້າທາງພຣະອົງ".*

ແຕ່ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ທ່ານນັ້ນມີຫຼວງຫຼາຍ ທຸກວັນນີ້ ພຣະເຢຊູຄຣິດຊົງປາຖະໜາໃຫ້ທ່ານຫັນກັບມາຫາພຣະອົງຍອມຮັບການຊ່ວຍເຫຼືອຈາກພຣະອົງ ພຣະຄຳພີ ໂຣມ 5:8 ກ່າວວ່າ *"ແຕ່ພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫຼາຍຄືຂະນະທີ່ເຮົາຍັງເປັນຄົນບາບຢູ່ນັ້ນ ພຣະຄຣິດໄດ້ຊົງສິ້ນພຣະຊົນເພື່ອເຮົາ".*

ການທີ່ພຣະຄຣິດຊົງສິ້ນພຣະຊົນເທິງໄມ້ກາງແຂນແລະພຣະໂລຫິດຂອງພຣະຄຣິດໄດ້ໄຫຼອອກໄຖ່ບາບເຮົາ *"ຕາມພຣະລາຊະບັນຍັດກືວ່າເກືອບທຸກສິ່ງຈະຖືກຊຳລະດ້ວຍເລືອດແລະຖ້າບໍ່ມີເລືອດໄຫຼອອກແລ້ວ ກໍຈະບໍ່ມີການອະໄພບາບເລີຍ* (ເຮັບເຣີ 9:22) *"ໃນພຣະເຢຊູນັ້ນເຮົາໄດ້ຮັບການໄຖ່ບາບໂດຍພຣະໂລຫິດຂອງພຣະອົງຄືໄດ້ຮັບການອະໄພໂທດບາບຂອງເຮົາໂດຍພຣະກະລຸນາອັນອຸດົມຂອງ*



2. ຖ້າເພີ່ມອັດຕາຄວາມໄວຂອງມ້າໝຸນເປັນ 30 ກິໂລແມັດຕໍ່ຊົ່ວໂມງ ເດັກໆຈະເລີ່ມຮ້ອງເພາະຄວາມຕົກໃຈ.

3. ຖ້າເພີ່ມອັດຕາຄວາມໄວຂອງມ້າໝຸນເປັນ 50 ກິໂລແມັດຕໍ່ຊົ່ວໂມງ ເດັກໆຈະຮູ້ສຶກຢ້ານຈົນຕົວສັ່ນ.

4. ຖ້າເພີ່ມອັດຕາຄວາມໄວຂອງມ້າໝຸນເປັນ 150 ກິໂລແມັດຕໍ່ຊົ່ວໂມງ ເດັກໆຈະລຸດອອກມາດ້ວຍແຮງທີ່ຫວ່ຽງແລະຕົວຂອງເດັກທີ່ລຸດອອກມາກໍຈະໝຸນ ແຕ່ທິດທາງຂອງຕົວເດັກທີ່ໝຸນຈະເປັນທິດທາງດຽວກັບແຮງທີ່ມາກະທຳ.

ເມື່ອເພີ່ມອັດຕາຄວາມໄວເຮັດໃຫ້ເດັກລຸດອອກມາແລະຕົວຂອງເດັກຈະໝຸນໄປໃນທິດທາງຂອງແຮງຫວ່ຽງຊຶ່ງຕາມກົດການເຄື່ອນທີ່ຂອງນິວຕັນ (Newton's Laws of Motion).

ກົດທີ 1 ວັດຖຸໃດໆຈະຢູ່ຄົງທີ່ ຫຼືຄົງເຄື່ອນທີ່ເປັນທາງກົງດ້ວຍຄວາມໄວເທົ່າເດີມ ຖ້າບໍ່ມີແຮງກະທຳຈາກພາຍນອກ.

ກົດທີ 2 ຖ້າມີແຮງກະທຳຕໍ່ວັດຖຸຈາກພາຍນອກ ວັດຖຸຈະມີຄວາມໄວໃນທິດທາງດຽວກັນກັບແຮງທີ່ມາກະທຳແລະມີຂະໜາດເປັນປະຕິພາກກົງກັບແຮງກະທຳ ແຕ່ເປັນປະຕິພາກກົງກັນຂ້າມກັບມວນຂອງວັດຖຸ.

ທີ່ຍົກມາເປັນ 2 ໃນ 3 ຂໍ້ເທົ່ານັ້ນ ຕາມກົດຂໍ້ທີ 2 ຖ້າມີແຮງກະທຳຕໍ່ວັດຖຸຈາກພາຍນອກ ວັດຖຸຈະມີຄວາມໄວໃນທິດທາງດຽວກັນກັບແຮງທີ່ມາກະທຳ ແລະຕາມຫຼັກ Angular Momentum ທິດທາງຂອງວັດຖຸທີ່ໝຸນຮອບຕົວເອງຕ້ອງເປັນທິດທາງດຽວກັນກັບແຮງທີ່ມາກະທຳດ້ວຍ ຖ້າທິດສະດີບິກແບງເປັນຄວາມຈິງແລ້ວດວງດາວທຸກດວງຈະໝຸນຮອບຕົວເອງໃນທິດທາງດຽວກັນ ຊຶ່ງໄດ້ຍົກຕົວຢ່າງໄປແລ້ວວ່າເດັກທີ່ລຸດຈາກມ້າໝຸນໂດຍການເພີ່ມອັດຕາ

ຄວາມໄວເປັນ 150 ກິໂລແມັດຕໍ່ຊົ່ວໂມງ ເດັກຈະລຸດອອກຈາກມ້າໝຸນແລະຕົວຂອງເດັກຈະໝຸນຮອບຕົວເອງໃນທິດທາງຕາມແຮງທີ່ມາກະທຳດັ່ງໃນພາບທີ່ໄດ້ສະແດງໄວ້.

ປະຈຸບັນນັກດາລາສາດພົບວ່າ :

1. ດາວເຄາະ 9 ດວງໝຸນຮອບຕົວເອງໃນທິດທາງທວນເຂັມໂມງ ຂະນະທີ່ດວງອາທິດໝຸນຮອບຕົວເອງໃນທິດທາງຕາມເຂັມໂມງ.

2. ມີດາວເຄາະ 7 ດວງທີ່ໂຄຈອນໃນທິດທາງທວນເຂັມໂມງ ແຕ່ມີດາວເຄາະ 2 ດວງທີ່ໂຄຈອນໃນທິດທາງຕາມເຂັມໂມງ.

3. ມີດວງຈັນ 11 ດວງທີ່ໝຸນຮອບຕົວເອງໃນທິດທາງຕາມເຂັມໂມງ ແຕ່ມີດວງຈັນ 4 ດວງທີ່ໝຸນຮອບຕົວເອງໃນທິດທາງທວນເຂັມໂມງ.

4. ມີດວງຈັນ 4 ດວງທີ່ໂຄຈອນໃນທິດທາງຕາມເຂັມໂມງ ແຕ່ມີດວງຈັນ 11 ດວງທີ່ໂຄຈອນໃນທິດທາງທວນເຂັມໂມງ.

ຊຶ່ງຖ້າທິດສະດີເອກະພົບທີ່ລະເບີດຫຼືບິກແບງເປັນຄວາມຈິງ ດວງດາວທຸກດວງໃນຈັກກະວານຈະເຄື່ອນໃນທິດທາງດຽວກັນ ແລະໝຸນຮອບຕົວເອງໃນທິດທາງດຽວກັນດ້ວຍ.

ບາງຄົນຄິດວ່າທິດສະດີວິວັດທະນາການເປັນຄວາມເຊື່ອທີ່ຖືກຕ້ອງ ຄິດວ່າມະນຸດວິວັດທະນາການມາຈາກສັດແຊນດຽວ ໂດຍໃຊ້ໄລຍະເວລາຫຼາຍພັນລ້ານປີ ຈົນກະທັ້ງວິວັດທະນາການເປັນລິງແອລ໌ປ (ລິງທີ່ບໍ່ມີຫາງ) ແລະຕໍ່ມາໄດ້ວິວັດທະນາການກາຍເປັນມະນຸດ.

ຊາຣ໌ລສ໌ ດາຣ໌ວິນ ສະໄໝທີ່ເພິ່ນຍັງໜຸ່ມໆ ເພິ່ນຂຸດດິນທີ່ຫຼັງບ້ານແລະພົບແຂ້ວເຫຼັ້ມໜຶ່ງ ຈາກນັ້ນໄດ້ນຳມາຂຽນຈົນຕະນາການ



ທ່ານອາດຈະມີຄຳຖາມວ່າ ເປັນຫຍັງຄົນທີ່ບໍ່ຍອມຮັບເອົາພຣະເຢຊູຄຣິດ ຈຶ່ງມີຄວາມຜິດບາບເຖິງຂັ້ນຕົກນະຣົກ ມັນໄຮ້ຊຶ່ງຄວາມຍຸຕິທຳເກີນໄປຕິ.

ຂໍໃຫ້ຟັງຄຳອະທິບາຍກ່ອນ ຢ່າຟ້າວດ່ວນສະຫລຸບວ່ອງໄວຈົນເກີນໄປ.

ສົມມຸດວ່າ ທ່ານຜູ້ອ່ານໄດ້ສ້າງບ້ານສວຍງາມຫຼັງໜຶ່ງໄວ້ພຽບພ້ອມໄປດ້ວຍເຄື່ອງໃຊ້ແລະເຄື່ອງອຳນວຍຄວາມສະດວກສະບາຍ ເວລານັ້ນມີຊາຍຄົນໜຶ່ງໄດ້ຖືສິດເຂົ້າມາໃນບ້ານຂອງທ່ານແລ້ວເວົ້າວ່າ "ບ້ານນີ້ມັນບັງເອີນເກີດຂຶ້ນມາຕາມທຳມະຊາດ" ແລະເຂົ້າໄປໃນບ້ານຫຼັງນີ້ແລ້ວເວົ້າວ່າ "ມັນບັງເອີນມີໄຟຟ້າ ຕູ້ເຢັນ ພັດລົມ ແລະອື່ນໆ".

ຈາກນັ້ນກໍອາໄສຢູ່ບ້ານຫຼັງນີ້ເປັນໄລຍະເວລາດົນນານພໍສົມຄວນ ພະຍາຍາມເຮັດຄວາມດີ ໂດຍເກັບກວາດຮັກສາຄວາມສະອາດໃຫ້.

ແຕ່ສິ່ງດຽວທີ່ລາວໄດ້ກະທຳຄືປະຕິເສດບໍ່ຍອມຮັບທ່ານເປັນເຈົ້າຂອງບ້ານ.

ໃນຖານະທີ່ທ່ານເປັນເຈົ້າຂອງບ້ານທ່ານຍ່ອມຢາກຮ້າຍກັບພຶດຕິກຳຂອງຄົນນີ້ທີ່ມາບຸກລຸກບ້ານຂອງທ່ານ ແຖມປະຕິເສດບໍ່ຮູ້ຈັກທ່ານ ສະນັ້ນແມ່ນລາວເຮັດຄວາມດີໂດຍເຮັດຄວາມສະອາດບ້ານໃຫ້ແກ່ທ່ານ ທ່ານກໍ່ບໍ່ສາມາດອະໄພໃຫ້ລາວໄດ້ ເຊັ່ນດຽວກັນພຣະເຈົ້າພຣະເຢຊູຄຣິດພຣະອົງຜູ້ຊົງສ້າງໂລກນີ້ ພຣະອົງຊົງເປັນເຈົ້າຂອງໂລກ ເມື່ອມະນຸດ ເຂົ້າມາໃນໂລກນີ້ ມະນຸດໄດ້ປະຕິເສດບໍ່ຮູ້ຈັກພຣະອົງ ຄວາມບາບທີ່ເຮັດໃຫ້ມະນຸດຕ້ອງຕົກນະຣົກຄື ການປະຕິເສດບໍ່ຮູ້ຈັກພຣະເຈົ້າ.

ມະຫາສານ ນຸ່ງຜ້າສີມ່ວງແລະຜ້າປ່ານເນື້ອດີ ແຕ່ບໍ່ເຄີຍທີ່ຈະສະແຫວງຫາພຣະເຈົ້າ ເວລາມີຄົນມາປະກາດຂ່າວປະເສີດກໍເສີຍໆ ແລະຖືວ່າເລື່ອງຂອງພຣະເຢຊູຄຣິດເປັນເລື່ອງທີ່ໜ້າຕະຫຼົກຂົບຂັນໄຮ້ສາລະແລະງົມງວາຍ ໃນອະດີດເມື່ອຢູ່ໃນໂລກນີ້ລາວບໍ່ຍອມຮັບພຣະເຢຊູຄຣິດ ເມື່ອຕາຍແລ້ວຕ້ອງໄປຢູ່ໃນທີ່ທໍລະມານເປັນນິດຄືບຶງໄຟນະຣົກ ພຣະຄຳພີ ລູກາ 16:23-25 ກ່າວວ່າ *"ແລ້ວເມື່ອຢູ່ໃນນະຣົກເປັນທຸກທໍລະມານຍິ່ງໜັກ ເສດຖີນັ້ນຈຶ່ງແຫງນເບິ່ງເຫັນອັບຣາຮາມຢູ່ໄກແລະເຫັນລາຊາໂລຢູ່ທີ່ເອິກຂອງທ່ານ ເສດຖີຈຶ່ງຮ້ອງວ່າອັບຣາຮາມ ບິດາເຈົ້າຂ້າ ຂໍເອັນດູຂ້າພະເຈົ້າເຖີດ ຂໍໃຊ້ລາຊາໂລມາເພື່ອຈະເອົາປາຍນິ້ວມືຈຸ່ມນ້ຳມາແຕະລີ້ນຂອງຂ້າພະເຈົ້າໃຫ້ເຢັນດ້ວຍວ່າຂ້າພະເຈົ້າທົນທຸກທໍລະມານຢູ່ໃນແປວໄຟນີ້ ແຕ່ອັບຣາຮາມຕອບວ່າລູກເອີຍ ເຈົ້າຈົ່ງລະນຶກວ່າເມື່ອເຈົ້າຍັງມີຊີວິດຢູ່ເຈົ້າໄດ້ຂອງດີສຳລັບຕົວແລະລາຊາໂລໄດ້ຂອງບໍ່ດີ ແຕ່ດຽວນີ້ລາວໄດ້ຮັບຄວາມເລົ້າໂລມ ແຕ່ເຈົ້າໄດ້ຮັບຄວາມທຸກທໍລະມານ"*. ເມື່ອຢູ່ໃນນະຣົກທີ່ທົນທຸກທໍລະມານ ຄວາມປາຖະໜາຂອງເສດຖີຄົນນີ້ຄືຢາກໃຫ້ຄົນອື່ນໆຮູ້ຈັກກັບພຣະເຢຊູຄຣິດຢາກໃຫ້ຄົນໄປບອກກັບຄົນອື່ນໆພຣະຄຳພີລູກາ16:27-31ກ່າວວ່າ *"ເສດຖີນັ້ນຈຶ່ງເວົ້າວ່າບິດາເຈົ້າຂ້າ ຖ້າຢ່າງນັ້ນຂໍທ່ານໃຊ້ລາຊາໂລໄປຍັງເຮືອນພໍ່ຂອງຂ້າພະເຈົ້າ ເພາະວ່າຂ້າພະເຈົ້າມີອ້າຍນ້ອງຫ້າຄົນ ໃຫ້ລາຊາໂລເປັນພະຍານແກ່ເຂົາ ເພື່ອບໍ່ໃຫ້ເຂົາມາເຖິງບ່ອນທໍລະມານນີ້ ແຕ່ອັບຣາຮາມຕອບລາວວ່າ ເຂົາມີໂມເຊແລະພວກຜູ້ປະກາດພຣະທຳນັ້ນແລ້ວ ໃຫ້ເຂົາຟັງຄົນເຫຼົ່ານັ້ນເຖີດ, ເສດຖີນັ້ນຈຶ່ງເວົ້າວ່າ `ບໍ່ໄດ້ ອັບຣາຮາມບິດາເຈົ້າຂ້າ ແຕ່ຖ້າຄົນໜຶ່ງຈາກໝູ່ຄົນຕາຍໄປຫາເຂົາ ເຂົາຈະກັບໃຈເສຍໃໝ່, ອັບຣາຮາມຈຶ່ງຕອບລາວວ່າ ຖ້າເຂົາບໍ່ຟັງໂມເຊແລະພວກຜູ້ປະກາດພຣະທຳ ແມ່ນຄົນໜຶ່ງຈະເປັນຂຶ້ນມາຈາກຄວາມຕາຍເຂົາກໍຍັງບໍ່ເຊື່ອ"*.



ໂຄງກະໂຫຼກຫົວຂອງລີງ ແລ້ວລີງນັ້ນກໍວິວັດທະນາການມາເປັນມະນຸດຍຸກຕ່າງໆ ເຊັ່ນ ໂຄຣມາຍອງສ໌ ໂຮໂມອີເຣກຕັດ ປັກກິ່ງໂຮໂມເຊປຽນສ໌. ຕໍ່ມາມີຄົນເອົາແຂ້ວເຫຼັ້ມນີ້ໄປພິສູດປາກົດວ່າເປັນແຂ້ວຂອງໝູປ່າເທົ່ານັ້ນ ສົມກັບຄຳກ່າວຂອງທ່ານ ອຣິສໂຕເຕີນ ວ່າ **"ທິດສະດີວິວັດທະນາການບໍ່ແມ່ນພຽງເລື່ອງເຫຼວໄຫຼເຊື່ອຖືບໍ່ໄດ້, ແຕ່ກໍາເນີດຂຶ້ນມາຈາກເລື່ອງເຫຼວໄຫຼເຊື່ອຖືບໍ່ໄດ້".**

ເຮົາມັກຈະພົບສື່ໂຄສະນາທາງທີວີ,ໜັງສືພິມ, ວິທະຍຸ ແລະອື່ນໆ ຊຶ່ງມັກຈະມີຂ່າວວ່າ ຂະນະນີ້ເຮົາໄດ້ຄົ້ນພົບຊາກໄດໂນເສົາອາຍຸ 100 ລ້ານປີ. ແລ້ວທ່ານເຊື່ອຫຼືບໍ່ວ່າ ຊາກໄດໂນເສົາຈະມີອາຍຸເຖິງ 100 ລ້ານປີ?

ໃນປະຈຸບັນບັນດານັກວິທະຍາສາດທັງຫຼາຍຈະທົດສອບໂຄງກະດູກດ້ວຍ (ຄາຣ໌ບອນ-14), ການທົດສອບດ້ວຍຄາຣ໌ບອນ-14 ນັ້ນບໍ່ແມ່ນວ່າຈະມີຄວາມແນ່ນອນແລະຖືກຕ້ອງທີ່ສຸດໃນການຄິດໄລ່ອາຍຸຂອງຊາກ (fossil)

ມີຄົນໜຶ່ງ ລາວຝັງຊາກແມວຂອງລາວໄວ້ 12 ປີ ແລ້ວຂຸດໂຄງກະດູກຂອງແມວນັ້ນສົ່ງໄປຍັງສະຖາບັນທາງວິທະຍາສາດເພື່ອຄິດໄລ່ຫາອາຍຸຂອງຊາກແມວ, ປາກົດວ່າທາງສະຖາບັນຕອບກັບມາວ່າຊາກນີ້ເປັນຊາກຂອງສັດຊະນິດໃໝ່ຫາກໍ່ຄົ້ນພົບ ອາຍຸປະມານ 70 ລ້ານປີ.

ທ່ານທີ່ຮັກ ແມ່ນແຕ່ຜູ້ທີ່ຄິດຄົ້ນແລະຜູ້ຮ່ວມວິໄຈ Carbon-14 ຄື Dr.Wilard F. Libby ກໍຍັງຍອມຮັບວ່າການທົດສອບດ້ວຍ Carbon-14 ບໍ່ມີຄວາມແນ່ນອນແລະຖືກຕ້ອງທີ່ສຸດ.

ຕາມພຣະຄຳພີຂອງພຣະເຈົ້າ ຖ້າເຮົານັບອາຍຸຂອງໂລກນີ້ໄດ້ປະມານ 6,000 ປີເທົ່ານັ້ນເອງ ບໍ່ໄດ້ເກີດຂຶ້ນມາເປັນ18-20 ພັນ

ລ້ານປີມາແລ້ວ. ເລີ່ມຕົ້ນນັບອາຍຸອາດາມເຖິງອັບຣາຮາມ 2,000 ປີ, ອັບຣາຮາມເຖິງພຣະເຢຊູຄຣິດ 2,000 ປີ, ພຣະເຢຊູຄຣິດເຖິງປະຈຸບັນ 2,000 ປີ ຊຶ່ງອາຍຸຂອງໂລກແລະຈັກກະວານພຽງແຕ່ 6,000 ປີເທົ່ານັ້ນ.

ຈັກກະວານຕ່າງໆທີ່ເຮົາເຫັນພຣະຄຳພີໄດ້ກ່າວເຖິງໃນເພງສັນລະເສີນ19:1,4-6 *"ຟ້າສະຫວັນທັງຫຼາຍເລົ່າເລື່ອງລັດສະໝີຂອງພຣະເຈົ້າ ແລະພື້ນອາກາດປ່າວປະກາດກິດຈະການແຫ່ງມືຂອງພຣະອົງ ສຽງປ່າວປະກາດນັ້ນໄດ້ລາມອອກທີ່ແຜ່ນດິນໂລກທົ່ວໄປ ແລະພາສານັ້ນໄປເຖິງທີ່ສຸດໂລກ, ໃນທີ່ນັ້ນ ພຣະອົງໄດ້ຕັ້ງເຕັນໄວ້ສຳລັບດວງຕາເວັນ, ຕາເວັນອອກຄືເຈົ້າບ່າວອອກມາຈາກແທ່ນອິວາຫະ, ຕາເວັນມີຄວາມຍິນດີຈະແລ່ນໃນທາງຂອງຕົນຄືຄົນທີ່ມີໃຈກ້າຫານ ຕາເວັນອອກມາຈາກທີ່ສຸດຟ້າເບື້ອງນີ້ວຽນຮອບໄປເຖິງທີ່ສຸດເບື້ອງນັ້ນ..."* ດວງດາວຕ່າງໆໄດ້ປະກາດເຖິງວ່າ ມີພຣະເຈົ້າຜູ້ຢູ່ເບື້ອງຫຼັງການຊົງສ້າງ.

ຕໍ່ໄປນີ້ເປັນບັນທຶກລັບທີ່ຫຼາຍທ່ານຍັງບໍ່ຮູ້ ພຣະຄຳພີປະຖົມມະການ 1:1-11 *"ເມື່ອຕົ້ນເດີມນັ້ນ ພຣະເຈົ້າຊົງເນລະມິດສ້າງຟ້າແລະແຜ່ນດິນໂລກ ແຜ່ນດິນໂລກນັ້ນກໍປາສະຈາກຮູບຮ່າງແລະວ່າງເປົ່າຢູ່ ຄວາມມືດຢູ່ເໜືອພື້ນນໍ້າແລະພຣະວິນຍານຂອງພຣະເຈົ້າປົກຄຸມຢູ່ເໜືອພື້ນນໍ້ານັ້ນ ພຣະເຈົ້າກ່າວວ່າ "ຈົ່ງໃຫ້ມີຄວາມສະຫວ່າງ" ແລ້ວຄວາມສະຫວ່າງກໍເກີດຂຶ້ນ ພຣະເຈົ້າຊົງເຫັນວ່າຄວາມສະຫວ່າງນັ້ນດີແລະພຣະເຈົ້າຊົງແຍກຄວາມສະຫວ່າງນັ້ນອອກຈາກຄວາມມືດ ພຣະເຈົ້າຊົງເອີ້ນຄວາມສະຫວ່າງວ່າວັນແລະພຣະອົງຊົງເອີ້ນຄວາມມືດນັ້ນວ່າຄືນ ມີເວລາແລງແລະເວລາເຊົ້າ ເປັນວັນທີ່ໜຶ່ງ. ພຣະເຈົ້າກ່າວ "ຈົ່ງໃຫ້ມີພື້ນອາກາດໃນລະຫວ່າງນໍ້າ ແລະຈົ່ງໃຫ້ພື້ນ*



ຄວາມຜິດບາບ ບໍ່ມີຫົນທາງອື່ນທີ່ຈະລອດພົ້ນໄດ້ ພຣະເຈົ້າພຣະເຢຊູຄຣິດໄດ້ອະໄພໂທດບາບໃຫ້ເຮົາແລ້ວດ້ວຍພຣະໂລຫິດຂອງພຣະອົງທີ່ໄດ້ໄຫຼອອກເທິງໄມ້ກາງແຂນນັ້ນເປັນຄ່າໄຖ່ຂອງຄວາມບາບ.

ພຣະຄຳພີ ໂຣມ 3:23 *"ເຫດວ່າທຸກຄົນເຮັດບາບແລະເສື່ອມຈາກລັດສະໝີຂອງພຣະເຈົ້າ"* ເຮົາທຸກຄົນເປັນຄົນບາບ ທຸກຄົນເຮັດບາບຕ້ອງຕົກນະຣົກ ພຣະຄຳພີ ໂຣມ 6:23 *"ເພາະວ່າຄ່າຈ້າງຂອງຄວາມບາບຄືຄວາມຕາຍ...(ນະຣົກ)"*.

ບາງຄົນອາດຈະຄິດວ່າເປັນຫຍັງພວກຄຣິສຕຽນຈຶ່ງເປັນພວກທີ່ມັກປະກາດ ຂະນະທີ່ສາສະໜາຕ່າງໆກໍບໍ່ຄ່ອຍປະກາດ ຫຼືວ່າພວກນີ້ມີເປົ້າໝາຍເພື່ອໃຫ້ທ່ານມາປ່ຽນສາສະໜາຫຼື?

ຖ້າທ່ານຄິດຢ່າງນີ້ ທ່ານຄິດຜິດເສຍແລ້ວ ທ່ານຜູ້ອ່ານທີ່ຮັກ ມີຄຣິສຕຽນຫຼວງຫຼາຍເມື່ອເຂົາໄດ້ພົບພຣະເຢຊູຄຣິດແລ້ວ ເຂົາມີຄວາມປາຖະໜາຢາກຈະໃຫ້ຄົນອື່ນຮູ້ຈັກພຣະເຈົ້າທ່ຽງແທ້ອົງດຽວຄືພຣະເຢຊູຄຣິດ ຈຶ່ງທຸ້ມເທຊີວິດແລະໃຊ້ຊັບສ່ວນຕົວໃນການປະກາດຂ່າວປະເສີດ ພວກເຂົາເຫຼົ່ານີ້ມີທຸກສາຂາອາຊີບເຊັ່ນ ແພດ ວິສະວະກອນ ຕຳຫຼວດ ທະຫານ ເຈົ້າຂອງບໍລິສັດ ຄົນເຮັດວຽກບ້ານແລະອື່ນໆ.

ພຽງເພາະວ່າໃຫ້ຄົນທັງຫຼາຍຫັນກັບມາຫາພຣະເຢຊູຄຣິດ ເພື່ອພົ້ນຈາກການພິພາກສາໃຫ້ຕົກຢູ່ໃນບຶງໄຟນະຣົກເປັນນິດນັ້ນເອງ ນະຣົກນັ້ນເປັນທີ່ທົນທຸກທໍລະມານທ່າມກາງແປວໄຟ ທີ່ນັ້ນເປັນທີ່ມືດ ຮ້ອງໄຫ້ ຂົບແຂ້ວແຄ້ວຟັນແລະບໍ່ມີນໍ້າໃຫ້ດື່ມ ພຣະເຢຊູຄຣິດ ພຣະອົງໄດ້ກ່າວເຖິງສະພາບຂອງຄົນທີ່ຢູ່ໃນນະຣົກອັນທົນທຸກເວດທະນາວ່າ ມີເສດຖີຄົນໜຶ່ງ ເມື່ອຄັ້ງທີ່ຢູ່ໃນໂລກນີ້ ລໍ້າລວຍ

ຊາຕານມັນມີອຳນາດເໜືອຄວາມຕາຍ ກ່າວຄືຖ້າພຣະເຈົ້າໃຫ້ມະນຸດຄົນບາບທຸກຄົນໄປສະຫວັນ ຊາຕານຈະຟ້ອງກ່າວໂທດວ່າພຣະເຈົ້າບໍ່ມີຄວາມຍຸຕິທຳ ເພາະວ່າມະນຸດເຮັດບາບແລະຊາຕານກໍເຮັດບາບ ສະນັ້ນທັງສອງຝ່າຍຈະຕ້ອງຖືກລົງໂທດໃນອະນາຄົດ ແຕ່ພຣະເຈົ້າຊົງຮັກມະນຸດໂລກພຣະອົງໄດ້ສະເດັດເຂົ້າມາໃນໂລກນີ້ບັງເກີດເປັນມະນຸດ ແລ້ວພຣະອົງໄດ້ຊົງສິ້ນພຣະຊົນເທິງໄມ້ກາງແຂນ ພຣະໂລຫິດຂອງພຣະເຢຊູຄຣິດທີ່ໄຫຼອອກເທິງໄມ້ກາງແຂນເປັນຄ່າໄຖ່ຄວາມຜິດບາບຂອງຄົນທັງຫຼາຍ ພຽງແຕ່ໃຫ້ທ່ານທັງຫຼາຍກັບໃຈເສຍໃໝ່ມາຫາພຣະເຈົ້າ ພຣະຄຳພີ ກິດຈະການ 3:19 ກ່າວວ່າ *"ເຫດສະນັ້ນທ່ານທັງຫຼາຍຈົ່ງຫັນກັບແລະຕັ້ງໃຈໃໝ່ ເພື່ອຈະຊົງລົບລ້າງຄວາມຜິດບາບຂອງທ່ານເສຍ ເພື່ອເວລາຊື່ນໃຈຍິນດີຈະໄດ້ມາຈາກພຣະພັກຂອງອົງພຣະຜູ້ເປັນເຈົ້າ".* ແລະຮັບການອະໄພໂທດຈາກພຣະເຈົ້າ. ທ່ານຜູ້ອ່ານທີ່ຮັກ ທ່ານຢ່າຄິດວ່າເລື່ອງກາງແຂນຂອງພຣະເຢຊູຄຣິດເປັນເລື່ອງໜ້າຫົວ ພຣະຄຳພີກ່າວວ່າ *"ຄົນທັງຫຼາຍທີ່ກຳລັງຈະພິນາດກໍເຫັນວ່າການປະກາດເລື່ອງກາງແຂນເປັນເລື່ອງໂງ່ ແຕ່ພວກເຮົາທີ່ລອດພົ້ນເຫັນວ່າເປັນລິດທານຸພາບຂອງພຣະເຈົ້າ ເພາະຕາມເລື່ອງທີ່ຊົງເປັນພຣະສະຕິປັນຍາຂອງພຣະເຈົ້າແລ້ວ ໂລກຈະຮູ້ຈັກພຣະເຈົ້າໂດຍປັນຍາບໍ່ໄດ້ ພຣະເຈົ້າຊົງພໍພຣະໄທທີ່ຈະຊ່ວຍຄົນທີ່ເຊື່ອໃຫ້ລອດພົ້ນໂດຍຄຳເທດສະໜາທີ່ເຂົາຖືວ່າໂງ່ນັ້ນ".* (1 ໂກຣິນໂທ 1:18,21)

ພຣະເຈົ້າພຣະເຢຊູບໍ່ຕ້ອງການໃຫ້ຄົນໜຶ່ງຄົນໃດຈິບຫາຍ, ພຣະເຢຊູຄຣິດ ພຣະອົງເປັນພຣະເຈົ້າທີ່ຮັບສະພາບມະນຸດເຕັມບໍລິບູນ ພຣະເຢຊູຄຣິດໄດ້ສະເດັດເຂົ້າມາໃນໂລກນີ້ເພື່ອຊ່ວຍມະນຸດໃຫ້ລອດພົ້ນຈາກນະຣົກ ຂະນະເມື່ອເຮົາທັງຫຼາຍຍັງຢູ່ໃນທ້ອງແຫ່ງ



*ອາກາດນັ້ນແຍກນ້ຳອອກຈາກນ້ຳ" ພຣະເຈົ້າຊົງສ້າງພື້ນອາກາດ ແລະຊົງແຍກນ້ຳທີ່ຢູ່ໃຕ້ພື້ນອາກາດອອກຈາກນ້ຳທີ່ຢູ່ເໜືອພື້ນອາກາດ ກໍເປັນດັ່ງນັ້ນ ພຣະເຈົ້າຊົງເອີ້ນພື້ນອາກາດວ່າຟ້າ ມີເວລາແລງ ແລະເວລາເຊົ້າ ເປັນວັນທີສອງ. ພຣະເຈົ້າກ່າວວ່າ "ຈົ່ງໃຫ້ນ້ຳທີ່ຢູ່ໃຕ້ຟ້າຮວບຮວມເຂົ້າຢູ່ແຫ່ງດຽວກັນ ຈົ່ງໃຫ້ທີ່ແຫ້ງປາກົດຂຶ້ນ" ກໍເປັນດັ່ງນັ້ນ ພຣະເຈົ້າຊົງເອີ້ນທີ່ແຫ້ງນັ້ນວ່າແຜ່ນດິນ ແລະທີ່ນ້ຳຮວບຮວມເຂົ້າຢູ່ແຫ່ງດຽວກັນນັ້ນວ່າທະເລ ພຣະເຈົ້າຊົງເຫັນວ່າດີ ພຣະເຈົ້າກ່າວວ່າ "ຈົ່ງໃຫ້ແຜ່ນດິນເກີດຕົ້ນຫຍ້າ ຕົ້ນຜັກທີ່ມີແກ່ນແລະຕົ້ນໄມ້ທີ່ອອກໝາກທີ່ມີແກ່ນໃນໝາກຕາມຊະນິດຂອງມັນເທິງແຜ່ນດິນ" ກໍເປັນດັ່ງນັ້ນ.*

ພຣະເຈົ້າກ່າວວ່າ ພຣະອົງເປັນຜູ້ສ້າງໂລກແລະສັບພະສິ່ງທັງປວງທີ່ມີຢູ່ໃນທີ່ນັ້ນ ພຣະອົງເປັນເຈົ້າແຫ່ງຟ້າສະຫວັນແລະແຜ່ນດິນໂລກ ພຣະອົງຊົງເປັນຜູ້ປະທານຊີວິດລົມຫາຍໃຈແລະສິ່ງສາລະພັດແກ່ຄົນທັງປວງຕ່າງຫາກ ຊຶ່ງຄັດແຍ່ງກັບຄວາມຄິດທີ່ວ່າໂລກນີ້ເກີດມາຈາກທຳມະຊາດຢ່າງບັງເອີນ. ຄວາມຄິດທີ່ວ່າໂລກນີ້ເກີດມາຈາກທຳມະຊາດຢ່າງບັງເອີນນັ້ນ ພື້ນຖານຄວາມເຊື່ອມາຈາກທິດສະດີວິວັດທະນາການຂອງ ຊາຣ໌ລສ໌ ດາຣ໌ວິນ. ຊາຣ໌ລສ໌ ດາຣ໌ວິນ ເປັນນັກວິທະຍາສາດຊາວອັງກິດ ຢູ່ລະຫວ່າງປີ ຄ.ສ 1809-1882 ເກີດທີ່ເຊຣູສ໌ບີວລີ ອັງກິດ. ປີ ຄ.ສ 1809 ເພິ່ນໄດ້ສະເໜີທິດສະດີວິວັດທະນາການວ່າ ສິ່ງມີຊີວິດເກີດມາຈາກທຳມະຊາດຢ່າງບັງເອີນແລະຄິດວ່າສິ່ງມີຊີວິດເລີ່ມຕົ້ນມີມາຫຼາຍກວ່າ 3.4 ພັນລ້ານປີຜ່ານມາແລ້ວ ໃນສະພາວະແວດລ້ອມທີ່ເໝາະສົມໂດຍເລີ່ມຕົ້ນຈາກສິ່ງທີ່ບໍ່ມີຊີວິດທີ່ມີໂມເລກຸນສະຫຼັບສັບຊ້ອນແລ້ວລວມກັນເຂົ້າເປັນກົດອະມິໂນ ຈາກນັ້ນເລີ່ມປ່ຽນແປງໄປຕາມສິ່ງແວດລ້ອມຈາກ

ຂະບວນການນີ້ເອງເຮັດໃຫ້ມີໂປຣຕີນເກີດຂຶ້ນແລະວິວັດທະນາການກາຍເປັນສັດແຊນດຽວ ໃນທີ່ສຸດສັດແຊນດຽວນັ້ນເລີ່ມວິວັດທະນາການຈົນເຖິງປະມານ 700 ພັນລ້ານປີຜ່ານມາແລ້ວ ໂດຍເລີ່ມຕົ້ນທີ່ຈະມີສັດຊັ້ນຕ່ຳ ແລ້ວຕໍ່ມາອີກ 570 ພັນລ້ານປີຜ່ານມາແລ້ວວິວັດທະນາການກາຍເປັນພວກແມງກະພຸນ ຕໍ່ມາອີກ 400 ພັນລ້ານປີຜ່ານມາ ແລ້ວວິວັດທະນາການກາຍເປັນພວກແມງໄມ້ຕ່າງໆ ແລະມີພືດເກີດຂຶ້ນ 360 ພັນລ້ານປີຜ່ານມາ ແລ້ວວິວັດທະນາການກາຍເປັນພວກປາທີ່ສາມາດອາໄສຢູ່ເທິງບົກໄດ້ ອີກ 200 ພັນລ້ານປີຜ່ານມາ ແລ້ວວິວັດທະນາການກາຍເປັນພວກໄດໂນເສົາແລະຊ້າງແມມມອດ ຕໍ່ມາອີກ 2 ພັນລ້ານປີຜ່ານມາແລ້ວເປັນຈຸດເລີ່ມຕົ້ນການວິວັດທະນາການຈົນກາຍມາເປັນມະນຸດ.

ທິດສະດີວິວັດທະນາການຂອງ ຊາຣ໌ລສ໌ ດາຣ໌ວິນ ກ່າວວ່າສິ່ງມີຊີວິດເກີດຂຶ້ນມາຈາກທຳມະຊາດຢ່າງບັງເອີນ ມະນຸດແລະສັດເລີ່ມຕົ້ນຈາກພວກແບກທີເຣຍແຊນດຽວນັ້ນ ແຕ່ພຣະເຈົ້າກ່າວວ່າ *"ຈົ່ງໃຫ້ແຜ່ນດິນເກີດຕົ້ນຫຍ້າ ຕົ້ນຜັກທີ່ມີແກ່ນແລະຕົ້ນໄມ້ທີ່ອອກໝາກທີ່ມີແກ່ນໃນໝາກຕາມຊະນິດຂອງມັນເທິງແຜ່ນດິນ".* ໝາຍຄວາມວ່າ ຖ້າທ່ານເອົາຜັກກາດນາໄປປູກ ແນ່ນອນມັນຈະງອກຂຶ້ນເປັນຜັກກາດນາ ມັນຈະບໍ່ງອກຂຶ້ນເປັນຜັກບົ້ງຫຼືຜັກຊະນິດອື່ນໆ ເພາະພຣະເຈົ້າສ້າງຕາມຊະນິດຂອງມັນ ເຮົາບໍ່ເຄີຍເຫັນຖົ່ວລຽນອອກໝາກເປັນໝາກມີ້ ເພາະພຣະເຈົ້າສ້າງຕາມຊະນິດຂອງມັນ. ຕາມຄວາມຈິງທີ່ເຮົາເຫັນຢູ່ໃນປະຈຸບັນ ເວລາຜ່ານມາຫຼາຍພັນປີແລ້ວຍັງບໍ່ມີພືດຊະນິດໃດໆກຳລັງເລີ່ມວິວັດທະນາການປ່ຽນໄປເປັນພືດອີກຊະນິດໜຶ່ງ ຖ້າທິດສະດີວິວັດທະນາການເປັນຄວາມຈິງແລ້ວເຮົາຈະພົບວ່າມີພືດຫຼາຍຊະນິດກຳລັງປ່ຽນໄປເປັນອີກຊະນິດໜຶ່ງ



ທຸກວັນນີ້ຊາຕານປັບກົນລະຍຸດໃໝ່ ໃຊ້ດົນຕຣີ ເພງທີ່ຮຸນແຮງ ແລະສະຖານເລີງລົມຕ່າງໆລໍ້ລວງມະນຸດ ເຮັດໃຫ້ມະນຸດຫຼົງຕິດບ້ວງແຮ້ວຂອງມັນແລະບໍ່ຍອມສະແຫວງຫາພຣະເຈົ້າ ພວກເຂົາຮັກການສະໜຸກສະໜານຫຼາຍກວ່າທີ່ຈະຮັກພຣະເຈົ້າ.

ພຣະຄຳພີ 1 ໂຢຮັນ 5:19 ກ່າວວ່າ *"ເຮົາທັງຫຼາຍຮູ້ວ່າເຮົາເປັນຂອງພຣະເຈົ້າແລະຊາວໂລກທັງສິ້ນຕົກຢູ່ໃຕ້ອຳນາດຂອງຄວາມຊົ່ວ".*

ມະນຸດໄດ້ຕົກຢູ່ໃຕ້ອຳນາດຂອງຜີຫຼືຊາຕານ ແຕ່ຜູ້ທີ່ກັບໃຈມາຫາພຣະເຈົ້າ ເຂົາຈະລຸດພົ້ນຈາກອຳນາດຂອງຜີ ພຣະຄຳພີ ກິດຈະການ 26:18 ກ່າວວ່າ *"ເພື່ອຈະໃຫ້ເຈົ້າເປີດຕາຂອງເຂົາ ເພື່ອເຂົາຈະກັບຈາກຄວາມມືດມາເຖິງຄວາມສະຫວ່າງ ແລະຈາກອຳນາດຂອງຊາຕານມາເຖິງພຣະເຈົ້າ ເພື່ອເຂົາຈະໄດ້ຮັບການຍົກໂທດຄວາມຜິດບາບຂອງເຂົາແລະໃຫ້ໄດ້ຮັບມໍລະດົກດ້ວຍກັນກັບຄົນທັງຫຼາຍຊຶ່ງຖືກແຍກຕັ້ງໄວ້ແລ້ວໂດຍຄວາມເຊື່ອໃນເຮົາ".*

ຄຣິສຕຽນໄດ້ລຸດພົ້ນຈາກພາຍໃຕ້ກົດເກນຂອງຊາຕານທີ່ຕ້ອງຖືວັນຕ່າງໆ ເຊັ່ນ ວັນມົງຄົນແລະວັນອັບປະມົງຄົນ ທຸກວັນທີ່ພຣະເຈົ້າຊົງສ້າງດີທັງໝົດ ເວລາເຂົ້າມາອາໄສຢູ່ໃນບ້ານຫຼັງໃໝ່ກໍບໍ່ຕ້ອງເຊັ່ນໄຫວ້ຜີອີກຕໍ່ໄປ ຜີແລະໄສຍະສາດທຸກຢ່າງບໍ່ສາມາດມີອຳນາດເໜືອຄຣິສຕຽນອີກຕໍ່ໄປແລະຄຣິສຕຽນມີໄຊຊະນະເໜືອຜີ, ຜີບໍ່ສາມາດເຂົ້າສິງຄຣິສຕຽນແທ້ໄດ້ ໃນພຣະຄຳພີ 1 ໂຢຮັນ 4:4 ກ່າວວ່າ *"ລູກນ້ອຍໆທັງຫຼາຍເອີຍ ທ່ານເປັນຝ່າຍພຣະເຈົ້າແລະໄດ້ຊະນະເຂົາເຫຼົ່ານັ້ນ ເພາະວ່າພຣະອົງຜູ້ຊົງສະຖິດຢູ່ໃນທ່ານທັງຫຼາຍເປັນໃຫຍ່ກວ່າຜູ້ນັ້ນທີ່ຢູ່ໃນໂລກ".* ແລະຄຣິສຕຽນແທ້ສາມາດຂັບໄລ່ຜີໂດຍພຣະນາມຂອງ ພຣະເຢຊູຄຣິດໄດ້.

ເຊື່ອຄົບຈຳນວນແລ້ວ ພຣະເຢຊູຄຣິດຈະສະເດັດກັບມາ ເຮັດໃຫ້ເວລາຂອງມັນສັ້ນລົງ ໃນພຣະຄຳພີ ໂຣມ 11:25 *"ເຫດສະນັ້ນພີ່ນ້ອງທັງຫຼາຍ ຂ້າພະເຈົ້າບໍ່ຢາກໃຫ້ທ່ານທັງຫຼາຍບໍ່ຮູ້ຈັກໃນຂໍ້ຄວາມເລິກລັບນີ້ ຢ້ານວ່າທ່ານຈະອວດຮູ້ ຄືເລື່ອງທີ່ບາງຄົນໃນພວກອິດສະຣາເອນໄດ້ມີໃຈແຂງກະດ້າງໄປ ຈົນເຖິງຄົນຕ່າງຊາດໄດ້ເຂົ້າມາຄົບຈຳນວນ".* ສິ່ງໜຶ່ງທີ່ຊາຕານຮູ້ວ່າ ພຣະເຈົ້າຊົງຮັກມະນຸດຫຼາຍທີ່ສຸດແລະຊາຕານຈະເຮັດໃຫ້ພຣະເຈົ້າເຈັບປວດຫຼາຍທີ່ສຸດຄືລໍ້ລວງໃຫ້ມະນຸດຖິ້ມພຣະເຈົ້າ ໃນທີ່ສຸດກໍຈະຕົກນະຣົກກັບມັນ! ຊຶ່ງພຣະເຈົ້າໄດ້ລົງທຶນຢ່າງມະຫາສານ ທີ່ພຣະອົງໄດ້ໄຖ່ມະນຸດບໍ່ແມ່ນເງິນທອງ ແຕ່ຍອມເອົາຊີວິດມາແລກກັບຊີວິດ ແລກດ້ວຍເລືອດ! ໄຖ່ເຮົາດ້ວຍເລືອດ ພຣະຄຳພີ 1 ເປໂຕ 1:19 *"ແຕ່ຊົງໄຖ່ດ້ວຍພຣະໂລຫິດອັນມີລາຄາສູງຂອງພຣະຄຣິດ ດັ່ງເລືອດລູກແກະທີ່ປາສະຈາກຕຳໜິຫຼືຈຸດດ່າງພ້ອຍ".*

ທຸກວັນນີ້ຊາຕານຍັງເຮັດວຽກຂອງມັນຢູ່ 2 ເທຊະໂລນິກ 2:9-10 ກ່າວວ່າ *"ຄືຜູ້ນັ້ນທີ່ມາໂດຍການດົນບັນດານຂອງຊາຕານພ້ອມກັບບັນດາການອິດທິລິດແລະໝາຍສຳຄັນແລະການອັດສະຈັນແຫ່ງຄວາມເທັດແລະອຸບາຍອະທຳທັງຫຼາຍສຳຫຼັບຄົນເຫຼົ່ານັ້ນທີ່ພິນາດຢູ່ເພາະເຂົາທັງຫຼາຍບໍ່ຮັບຄວາມຮັກແຫ່ງຄວາມຈິງໄວ້ເພື່ອຈະລອດພົ້ນໄດ້".* ຊາຕານສຳແດງລິດອຳນາດເພື່ອລໍ້ລວງມະນຸດຜ່ານການຊົງເຈົ້າເຂົ້າຜີ ໂດຍສຳແດງການອັດສະຈັນຕ່າງໆ ເຊັ່ນຍ່າງຜ່ານໄຟ ແທງປາກ ແທງລີ້ນ ເຂົ້າສິງຕາມຮູບເຄົາລົບແລະຕົ້ນໄມ້ ໂດຍໃຫ້ມີຣິດອຳນາດປິ່ນປົວພະຍາດ ເກີດການອັດສະຈັນຕ່າງໆ ເມື່ອມີຄົນໄປບົນບານແລ້ວມັນດົນບັນດານໃຫ້ເປັນຈິງ.



ທຸກວັນນີ້ພືດຊະນິດໃດກໍຍັງເປັນຊະນິດນັ້ນຢູ່ເໝືອນເດີມ ແມ່ນຫຼືບໍ?

ພຣະຄຳພີໃນປະຖົມການ 1:21, 25 ກ່າວວ່າ *"ພຣະເຈົ້າໄດ້ຊົງສ້າງປາວານໃຫຍ່ ບັນດາສັດທີ່ມີຊີວິດເຄື່ອນໄຫວໄປມາຕາມຊະນິດຂອງມັນເກີດຂຶ້ນບໍລິບູນໃນນ້ຳນັ້ນ ແລະບັນດາສັດທີ່ມີປີກຕາມຊະນິດຂອງມັນ ພຣະເຈົ້າຊົງເຫັນວ່າດີ ພຣະເຈົ້າໄດ້ຊົງສ້າງສັດປ່າເທິງແຜ່ນດິນໂລກຕາມຊະນິດຂອງມັນ ສັດໃຊ້ງານຕາມຊະນິດຂອງມັນແລະບັນດາສັດທີ່ເລືອຄານເທິງແຜ່ນດິນໂລກຕາມຊະນິດຂອງມັນພຣະເຈົ້າຊົງເຫັນວ່າດີ".*

ພຣະເຈົ້າພຣະອົງຊົງສ້າງສັດຕາມຊະນິດຂອງມັນ ເຮົາເຫັນພຣະເຈົ້າຊົງສ້າງພືດແລະສັດພຣະອົງຊົງແບ່ງແຍກກັນຢ່າງຊັດເຈນ ພືດສ່ວນພືດ ສັດສ່ວນສັດ ຊະນິດໃດເປັນຊະນິດນັ້ນ ນົກບໍ່ໄດ້ມາຈາກປາ ນົກອິນຊີບໍ່ໄດ້ມາຈາກໂຕເຈຍ ໝາບໍ່ໄດ້ມາຈາກແມວ ຄວາມຈິງເຮົາພົບວ່າໂຄຣໂມໂຊມຂອງສັດແຕ່ລະຊະນິດສາມາດໄຂວ່ກັນໄດ້ (crossing over) ແລະອອກລູກຫຼານ (inter-breeding) ເຊັ່ນ ໝາພັນອັນເຊຊຽນປະສົມພັນກັນກັບໝາພັນໄທແລ້ວມັນສາມາດອອກລູກຫຼານສືບພັນໄດ້.

ຖ້າເອົາສັດຕ່າງຊະນິດກັນເມື່ອນຳມາປະສົມພັນກັນ ໂຄຣໂມໂຊມບໍ່ສາມາດໄຂວ່ກັນໄດ້ (ປະຖົມມະການ 1:21, 24-25).

ທິດສະດີວິວັດທະນາການສອນວ່າ ສັດທຸກຊະນິດກຳເນີດມາຈາກຕົ້ນຕໍອັນດຽວກັນ ປາກາຍເປັນສັດບົກ ສັດບົກກາຍເປັນນົກແລະສັດກາຍເປັນມະນຸດ ປະຈຸບັນນີ້ສັດແຕ່ລະຊະນິດ (animal-pecies) ຍັງບໍ່ມີການປ່ຽນແປງ.

ມີຄົນພະຍາຍາມສ້າງສັດຊະນິດໃໝ່ແລະໃຫ້ມັນສືບພັນໄດ້ ຖ້າຄົນນັ້ນສ້າງສັດຊະນິດໃໝ່ແລະມັນສາມາດສືບພັນໄດ້ສະແດງວ່າພຣະຄຳພີຜິດ ແຕ່ຈົນເຖິງປະຈຸບັນນີ້ຍັງບໍ່ມີໃຜເຮັດໄດ້ ມີຄົນປະສົມພັນສັດດັ່ງຕໍ່ໄປນີ້ ພວກເຂົາເອົາເສືອ (Tiger) ປະສົມພັນກັບສິງໂຕ (Lion) ຄືໄລເກີຣ໌ (ເປັນໝັນ) ພວກເຂົາແມວ (Cat) ປະສົມພັນກັບກະຕ່າຍ (Rabbit) ຄືແຄດບິດ (ເປັນໝັນ) ພວກເຂົາເອົາມ້າ (Horse) ປະສົມພັນກັບລາ (Donkey) ຄືລໍ (ເປັນໝັນ) ຊາວຈີນເອົາເປັດໄທປະສົມພັນກັບເປັດເທດຄືເປັດໂປ້ຍຊ່າຍ (ເປັນໝັນອອກລູກຫຼານບໍ່ໄດ້).

ພຣະເຈົ້າສ້າງສັດຕາມຊະນິດຂອງມັນ ຖ້າປະສົມຂ້າມພັນເຮັດໃຫ້ມັນເປັນໝັນ ພຣະເຈົ້າກ່າວວ່າ ຫ້າມເອົາສັດຕ່າງຊະນິດມາປະສົມພັນກັນ ບໍ່ສະນັ້ນພຣະເຈົ້າຈະສາບແຊ່ງ (ໃຫ້ເປັນໝັນ).

ເຫດທີ່ມັນເປັນໝັນເພາະວ່າມັນບໍ່ມີ Homologous Chromosome ຄືໂຄຣໂມໂຊມສືບພັນນັ້ນເອງຈຶ່ງເຮັດໃຫ້ມັນເປັນໝັນ.

ໃນພຣະຄຳພີປະຖົມມະການ 1:26 ກ່າວວ່າ *ແລ້ວພຣະເຈົ້າກ່າວວ່າ "ຈົ່ງໃຫ້ພວກເຮົາສ້າງມະນຸດຕາມລັກສະນະຂອງພວກເຮົາຕາມຢ່າງພວກເຮົາ ແລະໃຫ້ພວກເຂົາຄອບຄອງຝູງປາໃນທະເລ ຝູງນົກໃນອາກາດແລະຝູງສັດໃຊ້ງານ ໃຫ້ຄອບຄອງແຜ່ນດິນທົ່ວທັງແຜ່ນດິນໂລກແລະບັນດາສັດເລືອຄານທີ່ຄານໄປມາເທິງແຜ່ນດິນໂລກ".*

ພຣະເຈົ້າເປັນຜູ້ສ້າງມະນຸດໃຫ້ເລີດລ້ຳດ້ວຍສະຕິປັນຍາ ສະນັ້ນມະນຸດຈຶ່ງເປັນຜູ້ທີ່ສະຫຼາດທີ່ສຸດໃນໂລກນີ້ແລະເປັນຜູ້ທີ່ສະຫຼາດປາດເປື່ອງ. ລູກຫຼານຂອງອາດາມໃນຍຸກເລີ່ມຕົ້ນສາມາດຫຼິ້ນດົນຕຣີ, ມີຟາມລ້ຽງສັດແລະສາມາດຫຼອມແຮ່ທອງແດງແລະແຮ່ເຫຼັກໄດ້ ບໍ່ຕ້ອງໃຊ້ເວລາຮຽນຮູ້ຫຼາຍພັນລ້ານປີຕາມທິດສະດີວິວັດທະນາການໄດ້ສອນໄວ້.



ຕິດຕາມຊາຕານລົງມາຍັງໂລກນີ້ມີຈຳນວນຫຼວງຫຼາຍເຖິງ 1 ໃນ 3 ສ່ວນຂອງທັງໝົດ ພຣະຄຳພີ ພຣະນິມິດ 12:4 *"ຫາງພະຍານາກກວາດດວງດາວໃນທ້ອງຟ້າຖິ້ມລົງມາທີ່ໂລກເສຍໜຶ່ງໃນສາມສ່ວນ ແລະພະຍານາກນັ້ນຢືນຢູ່ເບື້ອງໜ້າຜູ້ຍິງທີ່ກຳລັງຈະເກີດລູກ ເພື່ອຈະກິນລູກເມື່ອເກີດອອກມາແລ້ວ".*

ພຣະຄຳພີ ພຣະນິມິດ 20:10 ໄດ້ກ່າວເຖິງຊາຕານຫຼືຜີຈະຖືກຖິ້ມລົງໃນນະຮົກທີ່ທົນທຸກທໍລະມານໃນອະນາຄົດ ພຣະນິມິດ 20:10 *"ສ່ວນມານຊາຕານທີ່ລໍ້ລວງເຂົາເຫຼົ່ານັ້ນກໍຖືກໂຍນລົງໄປໃນບຶງໄຟແລະກຳມະຖັນທີ່ສັດຮ້າຍແລະຜູ້ທຳນວາຍປອມຢູ່ນັ້ນ ແລະມັນຕ້ອງທົນທຸກທໍລະມານທັງກາງວັນແລະກາງຄືນຕະຫຼອດໄປເປັນນິດ".*

ທຸກວັນນີ້ຊາຕານແລະສະໝຸນຂອງມັນຢູ່ໃນສະພາບປະລາໄຊ ມັນຈຶ່ງພະຍາຍາມທີ່ຈະດຶ້ນຮົນສຸດຂີດເພື່ອໃຫ້ມັນຕົກນະຮົກຊ້າທີ່ສຸດໂດຍການລໍ້ລວງໃຫ້ມະນຸດຫຼົງໄປຈາກທາງຂອງພຣະເຈົ້າແລະບໍ່ໃຫ້ມາເຖິງຄວາມພົ້ນ (ການລຸດພົ້ນຈາກນະຮົກ) ມະນຸດທັງຫຼາຍກໍຫຼົງຕິດກັບດັກຂອງມັນໄປ ເຊື່ອຟັງມານ (ຜີ) ຫຼາຍກວ່າຟັງພຣະເຈົ້າພຣະເຢຊູຄຣິດ. ໃນພຣະຄຳພີໂຢຮັນ 8:43-45 ພຣະເຢຊູກ່າວວ່າ *"ເຫດໃດທ່ານຈຶ່ງບໍ່ເຂົ້າໃຈຖ້ອຍຄຳທີ່ເຮົາເວົ້າ ນັ້ນເປັນເພາະທ່ານທົນຟັງຄຳຂອງເຮົາບໍ່ໄດ້ ທ່ານທັງຫຼາຍມາຈາກພໍ່ຂອງທ່ານຄືມານຊາຕານ ແລະທ່ານມັກຈະເຮັດຕາມຄວາມປາຖະໜາຂອງພໍ່ທ່ານ ມັນເປັນຄາດຕະກອນຕັ້ງແຕ່ເດີມມາ ແລະບໍ່ໄດ້ຕັ້ງຢູ່ໃນຄວາມຈິງ ເພາະຄວາມຈິງບໍ່ໄດ້ຢູ່ໃນມັນ ເມື່ອມັນເວົ້າຕົວະມັນກໍເວົ້າຕາມສັນດານຂອງມັນເອງ ເພາະມັນເປັນຜູ້ຕົວະແລະເປັນພໍ່ຂອງການຕົວະ ແຕ່ທ່ານທັງຫຼາຍບໍ່ໄດ້ເຊື່ອເຮົາ ເພາະເຮົາເວົ້າຄວາມຈິງ".* ເພາະເມື່ອມີຄົນທີ່ຮັບ

ລຳຕົວຂອງມັນປະດັບດ້ວຍເພັດນິນຈິນດາທີ່ມີຄ່າຫຼາຍ ມີເຄື່ອງດົນຕຣີຢູ່ໃນຕົວແລະຊາຕານປະກອບໄປດ້ວຍສະຕິປັນຍາທີ່ສະຫຼຽວສະຫຼາດ ພຣະຄຳພີ ເອເຊກຽນ 28:12-15 *"ບຸດແຫ່ງມະນຸດເອີຍ ຈົ່ງເປັ່ງສຽງບົດຄ່ຳຄວນເພື່ອກະສັດເມືອງໄທລະ ແລະຈົ່ງກ່າວແກ່ທ່ານວ່າອົງພຣະຜູ້ເປັນເຈົ້າພຣະເຈົ້າກ່າວດັ່ງນີ້ວ່າ ເຈົ້າເປັນກາ(ຕຣາ) ແຫ່ງຄວາມສົມບູນແບບ ເຕັມດ້ວຍສະຕິປັນຍາແລະມີຄວາມງາມຢ່າງພຽບພ້ອມ ເຈົ້າເຄີຍຢູ່ໃນເອເດນ ພຣະອຸທະຍານຂອງພຣະເຈົ້າ ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ ຄື ທັບທິມ ບຸດສະລາຄຳ ເພັດພອຍຂຽວ ພອຍສີນ້ຳເຂົ້າ ແລະຫຍົກໄພທູນ ນິລະກົດ ພອຍສີແດງເຂັ້ມແລະຄຳ ຄວາມຊ່ຽວຊານແຫ່ງລຳມະນາແລະປີ່ຂອງເຈົ້າໄດ້ຈັດຕຽມໄວ້ໃນວັນທີ່ໄດ້ສ້າງເຈົ້າຂຶ້ນມາ ເຈົ້າເປັນເຄລຸບຜູ້ພິທັກທີ່ໄດ້ເຈີມຕັ້ງໄວ້ ເຮົາໄດ້ຕັ້ງເຈົ້າໄວ້ ເຈົ້າເຄີຍຢູ່ເທິງພູເຂົາບໍລິສຸດແຫ່ງພຣະເຈົ້າ ແລະເຈົ້າເຄີຍຍ່າງຢູ່ທ່າມກາງສີລາເພີງ ເຈົ້າກໍປາສະຈາກຕຳໜິໃນວິທີການທັງຫຼາຍຂອງເຈົ້າ ຕັ້ງແຕ່ວັນທີ່ເຈົ້າໄດ້ຖືກສ້າງຂຶ້ນມາຈົນພົບຄວາມຊົ່ວຊ້າໃນຕົວເຈົ້າ"* ພຣະຄຳພີເອຊາຢາ14:12-14 *"ໂອລູຊີເຟີເອີຍ ໂອລົດແຫ່ງຮຸ່ງອະລຸນ ເຈົ້າລ່ວງຫຼົ່ນລົງມາຈາກຟ້າສະຫວັນແລ້ວນໍ ເຈົ້າຖືກຕັດລົງມາຍັງພື້ນດິນຢ່າງໃດໜໍ ເຈົ້າຜູ້ກະທຳໃຫ້ບັນດາປະຊາຊາດຕົກຕ່ຳ ເຈົ້າຮຳພຶງໃນໃຈຂອງເຈົ້າວ່າ ຂ້ອຍຈະຂຶ້ນໄປຍັງຟ້າສະຫວັນ ຂ້ອຍຈະຕັ້ງພະທີ່ນັ່ງຂອງຂ້ອຍຢູ່ເໜືອດວງດາວທັງຫຼາຍຂອງພຣະເຈົ້າ ຂ້ອຍຈະນັ່ງເທິງຂຸນເຂົາຊຸມນຸມສະຖານ ທີ່ດ້ານທິດເໜືອ ຂ້ອຍຈະຂຶ້ນໄປເໜືອຄວາມສູງຂອງເມກ ຂ້ອຍຈະກະທຳຕົວຂອງຂ້ອຍເໝືອນອົງຜູ້ສູງສຸດ".* ຂະນະທີ່ມັນໄດ້ກະບົດຕໍ່ພຣະເຈົ້າ ພຣະເຈົ້າໄດ້ພິພາກສາໃຫ້ມັນຕົກນະຮົກທັນທີແລະໃນອະນາຄົດ ຊາຕານຈະຖືກຖິ້ມລົງໃນນະຮົກ. ຈາກການກະບົດຄັ້ງນີ້ມີເທວະດາໄດ້ກະບົດ



ແລະປະການທີ່ສຳຄັນ ພຣະອົງຊົງໃຫ້ມະນຸດເປັນຜູ້ຄອບຄອງສິ່ງຕ່າງໆໃນໂລກ ພຣະອົງກ່າວວ່າ ພຣະອົງເປັນຜູ້ສ້າງມະນຸດ ຖ້າທ່ານໄຕ່ຕອງແລ້ວເບິ່ງໄປທີ່ຕົວທ່ານວ່າ ອະໄວຍະວະຕ່າງໆມັນຈະເກີດມາຈາກທຳມະຊາດຢ່າງບັງເອີນໄດ້ຫຼື!

ເປັນຫຍັງຮ່າງກາຍມີຕ່ອມອາມິດານທີ່ຄໍໄວ້ຕ້ານທານເຊື້ອພະຍາດ ມັນບັງເອີນເກີດຂຶ້ນເອງໄດ້ຫຼື? ເປັນຫຍັງຮ່າງກາຍມີຫົວໃຈສູບສີດເລືອດໂດຍທີ່ຫົວໃຈເຕັ້ນບໍ່ມີວັນຢຸດ ຫົວໃຈຕ້ອງສູບສີດເລືອດຕະຫຼອດຊີວິດຂອງຄົນເຮົາ ປະລິມານເທົ່າກັບລົດໄຟບັນທຸກນ້ຳມັນຍາວເຖິງ 80 ກິໂລແມັດ ມັນບັງເອີນເກີດຂຶ້ນເອງໄດ້ຫຼື?

ເປັນຫຍັງອາຫານທີ່ເຮົາຮັບປະທານມີທັງອາຫານປະເພດແປ້ງ ໄຂມັນ ໂປຣຕີນ ຈຶ່ງມີນ້ຳຍ່ອຍຕ່າງຊະນິດກັນ ມັນບັງເອີນເກີດຂຶ້ນເອງໄດ້ຫຼື?

ຖ້າທ່ານຖ່ອມໃຈນຶກເຖິງຄວາມອັດສະຈັນຂອງອະໄວຍະວະຕ່າງໆໃນຮ່າງກາຍຂອງທ່ານເຊັ່ນ ສະໝອງ ຕາ... ແລ້ວທ່ານຈະຮູ້ວ່າມັນຈະເກີດຂຶ້ນເອງຕາມທຳມະຊາດໄດ້ຫຼືບໍ? ເປັນຫຍັງມັນຈຶ່ງສົມບູນແລະດີຂະໜາດນີ້ ຈົນກະສັດດາວິດ ກ່າວໃນເພງສັນລະເສີນ 139:13-14 ວ່າ *"ເພາະພຣະອົງຊົງປັ້ນສ່ວນພາຍໃນຂອງຂ້າພະອົງ ພຣະອົງຊົງທໍຂ້າພຣະອົງເຂົ້າດ້ວຍກັນໃນມົດລູກແມ່ຂອງຂ້າພະອົງ ຂ້າພະອົງຈະສັນລະເສີນພຣະອົງ ເພາະຂ້າພະອົງຖືກສ້າງມາຢ່າງແປກປະຫຼາດແລະໜ້າຢ້ານ ພຣະລາຊະກິດຂອງພຣະອົງມະຫັດສະຈັນ ຂ້າພະອົງຮູ້ເລື່ອງນີ້ຢ່າງດີ".* ພວກເຮົາທີ່ເປັນຄຣິສຕຽນ ເຮົາເຊື່ອວ່າຮ່າງກາຍຂອງມະນຸດອັນໜ້າອັດສະຈັນເກີດຂຶ້ນຈາກຝີພຣະຫັດຂອງພຣະເຈົ້າພຣະເຢຊູຄຣິດ. ຂະນະນີ້ທ່ານກຳລັງເຊື່ອວ່າສິ່ງມີຊີວິດເກີດຂຶ້ນມາຈາກທຳມະຊາດຢ່າງບັງເອີນແລ້ວລະກໍ ຂ້າພະເຈົ້າຢາກຈະ

ບອກໃຫ້ທ່ານຮູ້ວ່າ ຊາຣ໌ລສ໌ ດາຣ໌ວິນ ເຈົ້າຂອງຄວາມຄິດທິດສະດີວິວັດທະນາການນັ້ນ ໃນວາລະສຸດທ້າຍກ່ອນສິ້ນຊີວິດ ເພິ່ນໄດ້ກັບໃຈໃໝ່ມາເຊື່ອໃນພຣະເຈົ້າແລະປະຕິເສດທິດສະດີວິວັດທະນາການຂອງເພິ່ນ, ເພິ່ນເສຍໃຈຫຼາຍຕໍ່ທິດສະດີວິວັດທະນາການຂອງເພິ່ນ ທີ່ມີຄົນຈຳນວນຫຼາຍເຊື່ອແລະປະຕິເສດບໍ່ເອົາພຣະເຈົ້າ ໂດຍຖືເອົາຄວາມຄິດຂອງ ຊາຣ໌ລສ໌ ດາຣ໌ວິນ ເປັນຄວາມຈິງຈົນກາຍເປັນສາສະໜາຂອງພວກເຂົາໄປແລ້ວ.

## ຄຳສາລະພາບຂອງ ຊາຣ໌ລສ໌ ດາຣ໌ວິນ

ຂໍ້ຄວາມຕໍ່ໄປນີ້ອາດຈະເຮັດໃຫ້ຄົນທີ່ເຊື່ອໃນທິດສະດີວິວັດທະນາການຊຶ່ງເຊື່ອວ່າໂລກແລະຈັກກະວານເກີດຂຶ້ນມາຈາກທຳມະຊາດຢ່າງບັງເອີນຫຼາຍຄົນໄດ້ປະຫຼາດໃຈທີ່ຮູ້ວ່າໃນວາລະສຸດທ້າຍຂອງຊີວິດ ຊາຣ໌ລສ໌ ດາຣ໌ວິນ ເພິ່ນໄດ້ກັບໃຈເສຍໃໝ່ມາເຊື່ອໃນພຣະຄຳພີ ຊຶ່ງກ່າວເຖິງພຣະເຈົ້າເປັນຜູ້ສ້າງໂລກ ດວງດາວ ຈັກກະວານແລະເປັນຜູ້ໃຫ້ກຳເນີດສິ່ງມີຊີວິດຕ່າງໆໃນໂລກນີ້ ຜູ້ທີ່ຈະເລີ່ມເລົ່າເລື່ອງລາວຕໍ່ໄປນີ້ຄື ທ່ານຍິງ ໂຮບ ອາໄສຢູ່ທີ່ເມືອງນອຣ໌ທຟີລດ໌ ປະເທດອັງກິດ. ທ່ານຍິງໂຮບ ນັ້ນເປັນຄຣິສຕຽນທີ່ຮັກພຣະເຈົ້າແລະເປັນຄົນດີຄົນໜຶ່ງ ນາງເຄີຍໄປຢ້ຽມຢາມ ຊາຣ໌ລສ໌ ດາຣ໌ວິນ ເລື້ອຍໆ ກ່ອນທີ່ເພິ່ນຈະເສຍຊີວິດ.

ເວລານັ້ນເປັນເວລາຕອນບ່າຍລະດູໃບໄມ້ຫຼົ່ນ ເປັນລະດູທີ່ມີທິວທັດສວຍງາມ ຊຶ່ງພວກເຮົາທີ່ເປັນຊາວອັງກິດມັກຫຼາຍ ໄດ້ມີຄົນໜຶ່ງເດີນທາງມາຫາຂ້າພະເຈົ້າແລະຂໍໃຫ້ຂ້າພະເຈົ້າໄປຢ້ຽມຢາມຊາຣ໌ລສ໌ ດາຣ໌ວິນ ຂະນະເມື່ອຂ້າພະເຈົ້າໄປເຖິງບ້ານຂອງເພິ່ນ ເພິ່ນກຳລັງນັ່ງພິງພະນັກຢູ່ເທິງຕຽງ ເອົາຕີນຢັນໝອນໄວ້ ສາຍຕາ



*ຄົນທັງຫຼາຍຊຶ່ງເພິ່ງການກະທຳຕາມພຣະລາຊະບັນຍັດກໍຖືກສາບແຊ່ງ ເພາະມີຄຳຂຽນໄວ້ວ່າ 'ທຸກຄົນທີ່ບໍ່ໄດ້ປະພຶດຕາມທຸກຂໍ້ຄວາມທີ່ຂຽນໄວ້ໃນໜັງສືພຣະລາຊະບັນຍັດກໍຖືກສາບແຊ່ງ'"*. ຈາກຄວາມເປັນຈິງແລ້ວບໍ່ມີຜູ້ໃດທີ່ຈະສາມາດຮັກສາຂໍ້ຫ້າມໃນສາສະໜານັ້ນໆໄດ້ຄົບທຸກຂໍ້ ແລະປະພຶດບໍ່ໄດ້ເຖິງມາດຕະຖານຂອງພຣະເຈົ້າ ພຣະເຈົ້າພຣະເຢຊູຄຣິດສະເດັດເຂົ້າມາໃນໂລກນີ້ເພື່ອຈະຊ່ວຍມະນຸດໂລກໃຫ້ລອດພົ້ນຈາກຄວາມຜິດບາບ ສາສະໜາຕ່າງໆກັບພຣະເຈົ້າພຣະເຢຊູຄຣິດ ແຕກຕ່າງກັນຢ່າງຊັດເຈນ ສາສະໜາມີໄວ້ເພື່ອຈະສອນແລະຊີ້ຄວາມຜິດບາບເທົ່ານັ້ນ ແຕ່ພຣະເຈົ້າພຣະເຢຊູຄຣິດສະເດັດມາໃນໂລກເພື່ອຈະຊ່ວຍມະນຸດໃຫ້ລອດພົ້ນຈາກຄວາມບາບ ແລ້ວສອນໃຫ້ປະຖິ້ມຄວາມຜິດບາບ ນີ້ເປັນ **"ພຣະຄຸນ"** ຂອງພຣະເຈົ້າຄຳວ່າ **"ພຣະຄຸນ"** ຄືສິ່ງທີ່ເຮົາຄົນບາບບໍ່ສົມຄວນໄດ້ຮັບ ແຕ່ພຣະເຈົ້າຊົງປະທານໃຫ້ເຮົາ ຄຣິສຕຽນປະພຶດດີເພາະສຳນຶກໃນພຣະຄຸນ ແລະສະແດງຄວາມຮັກຕໍ່ພຣະເຢຊູຄຣິດ ບໍ່ກ່ຽວກັບຄວາມພົ້ນເລີຍ ພຣະຄຳພີ ເອເຟໂຊ 2:8-9 *"ດ້ວຍວ່າຊຶ່ງທ່ານທັງຫຼາຍລອດພົ້ນນັ້ນກໍລອດພົ້ນໂດຍພຣະຄຸນເພາະຄວາມເຊື່ອແລະບໍ່ແມ່ນໂດຍຕົວທ່ານທັງຫຼາຍເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມລອດພົ້ນນັ້ນຈະໄດ້ມາເນື່ອງດ້ວຍການກະທຳກໍບໍ່ໄດ້ ເພື່ອບໍ່ໃຫ້ຄົນໜຶ່ງຄົນໃດອວດໄດ້"*.

ຕາມທີ່ກ່າວມາແລ້ວຄື ມະນຸດທັງຫຼາຍໄດ້ປະຖິ້ມພຣະເຈົ້າໄປໄຫວ້ຮູບເຄົາລົບແລະໄປຕັ້ງສາສະໜາຂຶ້ນມາ ມີສິ່ງໜຶ່ງທີ່ມະນຸດມັກຫຼາຍຄື ກາບໄຫວ້ຜີ, ຜີໃນພຣະຄຳພີຮຽກຊື່ວ່າ ຊາຕານ ຫຼືພະຍາມານ ຊຶ່ງເປັນເຈົ້ານາຍຂອງຜີທັງປວງ ບາງຄົນຄິດວ່າຊາຕານຄົງຈະໜ້າຢ້ານຫຼາຍ ແຕ່ຊາຕານຫຼືຜີນັ້ນຄືອັກຄະເທວະດາຂອງພຣະເຈົ້າ (ຫົວໜ້າຂອງເທວະດາ) ທີ່ພຣະເຈົ້າຊົງສ້າງມັນຂຶ້ນມາຢ່າງງົດງາມ

ອາດາມແລະເອວາ ບັນພະບຸລຸດຂອງເຮົາໃນໄລຍະທຳອິດ ຍັງນະມັດສະການອອກພຣະນາມຂອງພຣະເຈົ້າທີ່ທ່ຽງແທ້ ຕໍ່ມາພາຍຫຼັງມະນຸດໄດ້ປະຖິ້ມພຣະເຈົ້າທີ່ທ່ຽງແທ້ແລະຊົງຮັກເຂົາ ໄປກາບໄຫວ້ຮູບເຄົາລົບ ພຣະຄຳພີ ເອຊາຢາ 2:8-9 ກ່າວວ່າ *"ແຜ່ນດິນຂອງເຂົາເຕັມດ້ວຍຮູບເຄົາລົບ ເຂົາກາບໄຫວ້ຜົນງານແຫ່ງມືຂອງເຂົາ ຕໍ່ສິ່ງຊຶ່ງນິ້ວມືຂອງເຂົາໄດ້ກະທຳ ຄົນຕໍ່າຕ້ອຍຈຶ່ງກາບລົງແລະຄົນໃຫຍ່ໂຕກໍກົ້ມຕົວລົງ ສະນັ້ນຢ່າອະໄພເຂົາເລີຍ".*

ບາງຄົນເອົາຜ້າໄປພັນຈອມປວກແລ້ວກາບໄຫວ້ ບາງຄົນເອົາຜ້າໄປພັນຕົ້ນໄມ້ແລ້ວກາບໄຫວ້ ໄຫວ້ຮູບປັ້ນສັດ ແລະກາບໄຫວ້ສິ່ງທີ່ພຣະເຈົ້າສ້າງໄວ້ ເຊັ່ນ ດວງອາທິດປ່ຽນເປັນພະອາທິດ ດວງຈັນປ່ຽນເປັນພະຈັນ ພຣະຄຳພີໂຣມ 1:25 *"ເຂົາໄດ້ປ່ຽນຄວາມຈິງຂອງພຣະເຈົ້າໃຫ້ເປັນຄວາມເທັດ ແລະໄດ້ນະມັດສະການແລະບົວລະບັດສິ່ງທີ່ພຣະອົງໄດ້ຊົງສ້າງໄວ້ແທນພຣະອົງຜູ້ຊົງສ້າງຜູ້ສົມຄວນຈະໄດ້ຮັບຄວາມສັນລະເສີນເປັນນິດ ອາແມນ".*

ຈາກນັ້ນມະນຸດເລີ່ມກໍ່ຕັ້ງສາສະໜາຂຶ້ນມາ ຂ້ອຍຢາກບອກທ່ານວ່າການເປັນຄຣິສຕຽນບໍ່ໄດ້ເປັນການປ່ຽນສາສະໜາມາເປັນສາສະໜາຄຣິດ ຄຳວ່າ "ຄຣິສຕຽນ" ຄືຜູ້ທີ່ຕິດຕາມພຣະເຈົ້າສ້າງໂລກທີ່ທ່ຽງແທ້ ສາສະໜາຄືມີສາສະດາທີ່ເປັນມະນຸດແລ້ວຕັ້ງຄຳສອນຂຶ້ນມາປະພຶດປະຕິບັດກັນມີຂໍ້ຫ້າມຕ່າງໆ.

ເຮົາມັກໄດ້ຍິນຄົນເວົ້າສະເໝີວ່າ ສາສະໜາທຸກສາສະໜາສອນໃຫ້ເປັນຄົນດີ ນັ້ນເປັນຄຳເວົ້າທີ່ຖືກຕ້ອງທີ່ສຸດ ແຕ່ຖ້າມະນຸດໂລກຈະລຸດພົ້ນຈາກນະຮົກ ພຣະເຈົ້າພຣະເຢຊູຄຣິດມີມາດຕະຖານວ່າ ມະນຸດຕ້ອງຖືຂໍ້ຫ້າມໃນສາສະໜານັ້ນຄົບທຸກຂໍ້ ຜິດຂໍ້ໜຶ່ງຂໍ້ໃດບໍ່ໄດ້ຕັ້ງແຕ່ເກີດມາຈົນຕາຍ ພຣະຄຳພີ ຄາລາເຕຍ 3:10 *"ເພາະວ່າ*



ຂອງເພິ່ນຈ້ອງມອງຢ່າງເລື່ອນລອຍໄປທີ່ແຄມປ່າແລະໄຮ່ສາລີ ຂະນະນັ້ນເປັນເວລາທີ່ດວງອາທິດໃກ້ຈະຕົກດິນ ເມື່ອເພິ່ນຫຼຽວເຫັນຂ້າພະເຈົ້າ ເພິ່ນສະແດງອາການດີໃຈຢ່າງອອກໜ້າອອກຕາ ເພິ່ນໄດ້ບອກໃຫ້ຂ້າພະເຈົ້າເບິ່ງຜ່ານປ່ອງຢ້ຽມເບິ່ງດວງອາທິດກຳລັງຈະຕົກດິນ ວ່າມັນສວຍງາມແທ້ໆ.

ຂ້າພະເຈົ້າສັງເກດວ່າໃນມືຂອງເພິ່ນກຳລັງເປີດພຣະຄຳພີ ຂ້າພະເຈົ້າຮູ້ວ່າໃນວາລະສຸດທ້າຍຊີວິດຂອງ ຊາຣ໌ລສ໌ ດາຣ໌ວິນ ເພິ່ນຂະມັກຂະເມັ້ນໃນການສຶກສາພຣະຄຳພີຢ່າງເອົາຈິງເອົາຈັງ.

ຂ້າພະເຈົ້າຖາມວ່າ "ທ່ານກຳລັງສຶກສາເລື່ອງຫຍັງຢູ່?"

ເພິ່ນຕອບວ່າ "ໜັງສືເຮັບເຣີ ຂ້ອຍເອີ້ນໜັງສືນີ້ວ່າເປັນໜັງສືແຫ່ງຄວາມຍິ່ງໃຫຍ່" ແລ້ວເພິ່ນໄດ້ອະທິບາຍຂໍ້ພຣະຄຳພີໃນໜັງສືເຮັບເຣີ ໃຫ້ຂ້າພະເຈົ້າຟັງ (ໜັງສືເຮັບເຣີ 1:1-14 ໄດ້ກ່າວເຖິງພຣະເຈົ້າພຣະເຢຊູເປັນຜູ້ສ້າງຈັກກະວານແລະຄ້ຳຊູໂລກໄວ້ດ້ວຍພຣະດຳລັດອັນຊົງລິດຂອງພຣະອົງ).

ຂ້າພະເຈົ້າພົບວ່າມີຄົນຫຼາຍຄົນກຳລັງມີຄວາມຄິດຕໍ່ຕ້ານຢ່າງຮຸນແຮງໃນເລື່ອງການຊົງສ້າງຂອງພຣະເຈົ້າ ໂດຍສະເພາະໃນບົດທຳອິດຂອງໜັງສືປະຖົມການທີ່ກ່າວເຖິງການກຳເນີດໂລກ ດວງດາວ ຈັກກະວານແລະສິ່ງທີ່ມີຊີວິດຕ່າງໆໃນໂລກນີ້.

ເມື່ອຂ້າພະເຈົ້າຫຼຽວເບິ່ງສີໜ້າຂອງ ຊາຣ໌ລສ໌ ດາຣ໌ວິນ ເພິ່ນກຳລັງມີຄວາມທຸກແລະວິຕົກກັງວົນໃຈຫຼາຍ ນິ້ວມືຂອງເພິ່ນກະຕຸກເປັນໄລຍະໆ ແລ້ວເພິ່ນເວົ້າວ່າ "ຕອນນັ້ນຂ້ອຍເປັນພຽງຄົນໜຸ່ມຄົນໜຶ່ງເທົ່ານັ້ນທີ່ຕັ້ງສົມມຸດຖານທິດສະດີວິວັດທະນາການຂຶ້ນມາໂດຍທີ່ຍັງບໍ່ໄດ້ຫາຂໍ້ເທັດຈິງ ຂ້ອຍໄດ້ຕັ້ງຄຳຖາມຕ່າງໆອີກຫຼວງຫຼາຍແລະສະເໜີຄວາມຄິດໃໝ່ໆໃນສິ່ງທີ່ຂ້ອຍສົງໄສ ຂ້ອຍໄດ້ສະ

ເໜີຄວາມຄິດວ່າ ໂລກນີ້ໜ້າຈະເກີດຂຶ້ນມາຈາກທຳມະຊາດຢ່າງບັງເອີນແລະມີການວິວັດທະນາການຈົນກາຍມາເປັນສິ່ງມີຊີວິດຕ່າງໆ ເຮັດໃຫ້ມີຄົນຈຳນວນຫຼວງຫຼາຍຫຼົງງົມງວາຍເຊື່ອວ່າຄວາມຄິດທີ່ຂ້ອຍສະເໜີໄປນັ້ນເປັນຄວາມຈິງຈົນກາຍມາເປັນສາສະໜາຂອງພວກເຂົາ".

ເພິ່ນຢຸດນິ້ງຊົ່ວຂະນະໜຶ່ງ ເພິ່ນໄດ້ເວົ້າເຖິງຄວາມບໍລິສຸດຂອງພຣະເຈົ້າ ແລະພຣະຄຳພີວ່າ ເປັນໜັງສືທີ່ຍິ່ງໃຫຍ່ໂດຍໄດ້ເປີດເຜີຍຄວາມຈິງແກ່ມະນຸດໂລກ.

ເພິ່ນຫຼຽວເບິ່ງພຣະຄຳພີຢ່າງໜ້າອັດສະຈັນໃນເວລານັ້ນພ້ອມກັບເອີ່ຍຖາມຂ້າພະເຈົ້າວ່າ "ຂ້ອຍມີບ້ານສຳລັບລະດູຮ້ອນໃນສວນ ສາມາດນັ່ງໄດ້ເຖິງ 30 ຄົນ ມັນຢູ່ທາງນັ້ນ" ແລ້ວເພິ່ນກໍຊີ້ມືໄປທາງປ່ອງຢ້ຽມທີ່ເປີດໄວ້ "ຂ້ອຍຢາກໃຫ້ເຈົ້າໄປເປັນພະຍານທີ່ນັ້ນ ຂ້ອຍຮູ້ວ່າເຈົ້າມັກປະກາດຂ່າວປະເສີດຂອງພຣະເຢຊູຄຣິດຕາມໝູ່ບ້ານຕ່າງໆ ມື້ອື່ນຕອນບ່າຍຂ້ອຍຈະເຊີນເພື່ອນບ້ານ ຜູ້ທີ່ເຂົາເຊົ່າບ້ານຂອງຂ້ອຍແລະຄົນໃຊ້ມາຮ່ວມປະຊຸມ ເຈົ້າຊ່ວຍເປັນພະຍານໃຫ້ພວກເຂົາໄດ້ບໍ?"

ຂ້າພະເຈົ້າຖາມວ່າ "ເຈົ້າຈະໃຫ້ເວົ້າກ່ຽວກັບເລື່ອງຫຍັງ?" ເພິ່ນຕອບດ້ວຍສຽງໜັກແໜ້ນຊັດເຈນວ່າ "ພຣະເຈົ້າພຣະເຢຊູຄຣິດແລະຄວາມພົ້ນໃນພຣະອົງ" (ຄວາມພົ້ນຄືການລຸດພົ້ນຈາກບຶງໄຟນະຣົກອັນໜ້າຢ້ານທີ່ໄໝ້ຢູ່ເປັນນິດ) ນັ້ນເປັນຫົວຂໍ້ທີ່ດີທີ່ສຸດບໍ່ແມ່ນຫຼື ແລ້ວຂ້ອຍຢາກໃຫ້ເຈົ້າຮ້ອງເພງສັນລະເສີນພຣະເຈົ້ານຳ ເຈົ້າສາມາດຫຼິ້ນເຄື່ອງດົນຕຣີນຳໄດ້ບໍ?"

ເບິ່ງໜ້າຕາຂອງເພິ່ນສົດໃສຫຼາຍຂຶ້ນ ເພິ່ນເວົ້າວ່າ "ຖ້າເຈົ້າປະຊຸມກັນຕອນບ່າຍ 3 ໂມງ ປ່ອງຢ້ຽມນີ້ຈະເປີດໄວ້ແລະໃຫ້ເຈົ້າຮູ້ວ່າຂ້ອຍກຳລັງຮ້ອງເພງແລະສັນລະເສີນພຣະເຈົ້າກັບພວກເຈົ້າ".



ຈະມີອັນໃດທີ່ໜ້າອັດສະຈັນໃຈໄປຫຼາຍກວ່ານີ້ ເມື່ອຊາຣ໌ລສ໌ ດາຣ໌ວິນ ໄດ້ມີຄວາມກະຕືລືລົ້ນສະແຫວງຫາຄວາມຈິງໃນພຣະຄຳພີ ແລ້ວເພິ່ນເອງເສຍໃຈເປັນຢ່າງຍິ່ງທີ່ຕົວຂອງເພິ່ນເອງເປັນຕົ້ນເຫດຄວາມເຊື່ອແຫ່ງທິດສະດີວິວັດທະນາການ ເປັນເຫດໃຫ້ມະນຸດທັງຫຼາຍໄດ້ຫຼົງໄປຈາກພຣະເຈົ້າ ແລະຄວາມເຊື່ອຂອງເພິ່ນໄດ້ແພ່ຫຼາຍອອກໄປສອນຕາມໂຮງຮຽນ ວິທະຍາໄລ ມະຫາວິທະຍາໄລ ຊຶ່ງເປັນຮາກຖານຄວາມເຊື່ອໃນປະຈຸບັນນີ້.

ໂດຍ Oswald J Smith Litt.D. ຈາກເລື່ອງລາວໃນ rayer Crusade ຊຶ່ງຕີພິມໂດຍ the Little Church by the Sea, Inc.

ເປັນຫຍັງມະນຸດຈຶ່ງຢ້ານຄວາມບາບແລະຮູ້ຈັກຜິດຊອບຊົ່ວດີ ໃນປະຖົມມະການ 2:7 ກ່າວວ່າ *"ພຣະເຢໂຮວາພຣະເຈົ້າຊົງປັ້ນມະນຸດດ້ວຍພົງຂີ້ຝຸ່ນດິນ ຊົງລະບາຍລົມຫາຍໃຈແຫ່ງຊີວິດເຂົ້າທາງຮູດັງລາວ ແລະມະນຸດຈຶ່ງເກີດເປັນຈິດວິນຍານມີຊີວິດຢູ່"*. ມະນຸດນັ້ນແຕກຕ່າງຈາກສັດເພາະມະນຸດເປັນຈິດວິນຍານ ຮູ້ຈັກຜິດຊອບຊົ່ວດີ ຄວາມຈິງແລ້ວຖ້າມະນຸດບໍ່ມີສາສະໜາ ມະນຸດກໍສາມາດຮູ້ວ່າອັນໃດດີອັນໃດຊົ່ວ ເພາະຈິດວິນຍານທີ່ພຣະເຈົ້າປະທານໃຫ້ແຕ່ລະຄົນເປັນຜູ້ທີ່ບົ່ງບອກວ່າ ອັນໃດດີອັນໃດຊົ່ວ ປະຫວັດສາດຂອງເຜົ່າພັນມະນຸດເລີ່ມຕົ້ນທີ່ພຣະເຈົ້າຊົງສ້າງມະນຸດຄູ່ທຳອິດ ອາດາມແລະເອວາໃຫ້ຢູ່ໃນສວນເອເດນ ຕໍ່ມາອາດາມໄດ້ກະບົດບໍ່ເຊື່ອຟັງພຣະເຈົ້າເປັນເຫດໃຫ້ຄວາມບາບໄດ້ເຂົ້າມາໃນໂລກນີ້ ຜົນຂອງການເຮັດຜິດບາບເຮັດໃຫ້ອາດາມແລະເອວາຕ້ອງຕາຍຝ່າຍຈິດວິນຍານ (ຕົກນະຣົກ) ແລະຕາຍຝ່າຍເນື້ອໜັງດ້ວຍ ຄວາມຕາຍໄດ້ຕໍ່ເນື່ອງມາເຖິງປະຈຸບັນ ແຕ່ພຣະເຈົ້າມີພຣະສັນຍາຈະປະທານຜູ້ໄຖ່ບາບໃຫ້ເຂົາທັງສອງແລະພົງພັນມະນຸດໂລກ ລູກຫຼານຂອງອາ